# ປະຫວັດພັກຢູ່ແຂວງສາລະວັນ

ເມື່ອຫວນຄືນປະຫວັດສາດ 65 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງພັກ, ພວກເຮົາ ມີຄວາມເອກອ້າງທະນົງໃຈເປັນຢ່າງຍິ່ງ ທີ່ເຫັນວ່າພັກເຮົາສາມາດສືບທອດ, ເສີມຂະຫຍາຍມູນເຊື້ອອັນອົງອາດກ້າແກ່ນ ຂອງຊາດລາວໃຫ້ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ, ພັກຍາມໃດ ກໍ່ມີຄວາມຈົງຮັກພັກດີ ຢ່າງສຸດຊື້ງຕໍ່ຜົນປະໂຫຍດຂອງຊາດ ແລະ ປະຊາຊົນຍາມໃດ ກໍ່ມີຄວາມສະໜິດຕິດພັນກັບມະຫາຊົນ, ເອົາມະຫາຊົນເປັນກຳລັງແຮງອັນບໍ່ເຫືອດແຫ້ງຂອງພັກ, ຍາມໃດກໍ່ມີຄວາມສາມັກຄີເປັນເອກະພາບອັນເປັນປຶກແຜ່ນແໜ້ນໜາ, ຍາມໃດກໍ່ເຊີດຊູຄວາມເປັນເອກະລາດ, ເປັນເຈົ້າຕົນເອງ, ມີຫົວຄິດປະດິດສ້າງມີໄຫວພິບ ໃນການວາງແນວທາງນະໂຍບາຍ ແລະ ຊີ້ນຳພາລະກິດປະຕິວັດຢູ່ປະເທດເຮົາມາໂດຍຕະຫຼອດ.

ພວກເຮົາ ຕ້ອງຍຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ ສູ້ຊົນນຳພາສ້າງສາພັດທະນາແຂວງສາລະວັນ ໃຫ້ແທດເໝາະກັບສະພາບຂອງຕົນເອງ, ຕັ້ງໜ້າຂຸດຄົ້ນກຳລັງແຮງບົ່ມຊ້ອນທັງໝົດຂອງຕົນຢ່າງສຸດຂີດ ຈັດຕັ້ງປະຕິບັດແນວທາງຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ເອົາໃຈໃສ່ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງຕົນໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ, ສາມາດເວົ້າໄດ້ວ່າ: ບໍ່ມີເວລາໃດໝົດ ທີ່ປະເທດຊາດກໍ່ຄືແຂວງພວກເຮົາ ຈະໄດ້ຮັບການພັດທະນາຄືແນວນີ້ ກ່ອນການມີພັກນຳພາ 65 ປີ, ກ່ອນສະຖາປະນາ ສປປ ລາວ 45 ປີ ແຂວງສາລະວັນ ເປັນສະໜໍລະພູມລົບ ຖືກສົງຄາມທຳລາຍຢ່າງຮາບກ້ຽງ ແຕ່ພາຍຫຼັງສ້າງຕັ້ງພັກໃນວັນທີ 22 ມີນາ 1955 ແລະ ສະຖາປະນາປະເທດຊາດໃນວັນທີ 2 ທັນວາ 1975 ໄດ້ເຮັດໃຫ້ທ້ອງຖິ່ນເຮົາ ມີການພັດທະນາໃນຫຼາຍດ້ານ:

**✧ ເລີ່ມແຕ່ກອງປະຊຸມໃຫຍ່ຄັ້ງທີ I ຂອງອົງຄະນະພັກແຂວງສາລະວັນ ປີ ( 1964-1970)** ໃນວັນທີ 20/4/1964 ກອງປະຊຸມໃຫຍ່ອົງຄະນະພັກແຂວງສາລະວັນ ໄດ້ເປີດຂຶ້ນຢູ່ທີ່ບ້ານຕຸກລຸກ ເມືອງເລົ່າງາມ ແຂວງສາລະວັນ, ມີຜູ້ແທນສົມບູນເຂົ້າຮ່ວມທັງຫມົດ 59 ສະຫາຍ ຍິງ 3 ສະຫາຍ ເປັນຕົວແທນໃຫ້ແກ່ສະມາຊິກພັກທັງຫມົດ 400 ສະຫາຍ ເລືອກຕັ້ງເອົາຄະນະບໍລິຫານງານພັກແຂວງ 11 ສະຫາຍ ຍິງ 1 ສະຫາຍ ໂດຍແມ່ນ:

- ສະຫາຍ ສົມສະຫນິດ ເປັນເລຂາຄະນະພັກແຂວງ.

- ສະຫາຍ ບາຈັນ ເປັນຮອງເລຂາຄະນະພັກແຂວງ.

**+ ຫນ້າທີ່ການເມືອງໄລຍະນີ້ແມ່ນ:**

- ປຸກລະດົມຂົນຂວາຍທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນ ແລະ ຊັ້ນຄົນໃຫ້ເພີ່ມທະວີຄວາມສາມັກຄີຢ່າງຫນັກແຫນ້ນ ຕໍ່ສູ້ກັບຈັກກະພັດອາເມລິກາ.

- ກໍ່ສ້າງ ແລະ ປັບປຸງກຳລັງປະກອບອາວຸດ ແລະ ເຄິ່ງປະກອບອາວຸດໃຫ້ເຂັ້ມແຂງ ຮັບປະກັນທາງດ້ານຈຳນວນ ແລະ ຄຸນນະພາບ.

- ກໍ່ສ້າງ ແລະ ປັບປຸງເຂດທີ່ຫມັ້ນຂອງການປະຕິວັດໃຫ້ມີຄວາມເຂັ້ມແຂງ ແລະ ຫນັກແຫນ້ນ ເພື່ອເປັນແປ້ນຢັນໃຫ້ແກ່ການປະຕິວັດ.

- ເອົາໃຈໃສ່ປັບປຸງກໍ່ສ້າງພັກ, ກໍ່ສ້າງພະນັກງານ ໃຫ້ມີຄວາມຮູ້ຄວາມສາມາດມີຄຸນສົມບັດສົນທຳປະຕິວັດ.

- ຂົນຂວາຍກໍ່ສ້າງຮາກຖານພັກ, ຮາກຖານການເມືອງປະຕິວັດ ແລະ ປັບປຸງອຳນາດການປົກຄອງຂັ້ນຕ່າງໆໃນເຂດທີ່ຫມັ້ນ .

ອອກແຮງປຸກລະດົມຂົນຂວາຍທະຫານສັດຕູ ໃຫ້ເຂົາເບື່ອຫນ່າຍຕໍ່ເຈົ້ານາຍຂອງພວກເຂົາ ແລະ ໃຫ້ມີນ້ຳໃຈຮັກຊາດ-ຮັກປະຊາຊົນ, ຫລຸດຜ່ອນການເຂັ່ງຂ້າຮາວີປະຊາຊົນຜູ້ບໍລິສຸດ ແລະ ຕອບຕ້ານຈັກກະພັດອາເມລິກາຜູ້ຮຸກຮານອີກດ້ວຍ.

**✧ ໄລຍະກອງປະຊຸມໃຫຍ່ຄັ້ງທີ II ຂອງອົງຄະນະພັກແຂວງສາລະວັນ ປີ ຄ.ສ 1971-1974.**

ວັນທີ 10/ 4/ 1971 ກອງປະຊຸມໃຫຍ່ຄັ້ງທີ II ຂອງອົງຄະນະພັກແຂວງສາລະວັນ ໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍ ຢູ່ເຂດທີ່ຫມັ້ນຂອງການປະຕິວັດ ຢູ່ບ້ານວັງກະນານ ເມືອງເລົ່າງາມ, ຊຶ່ງມີຜູ້ແທນສົມບູນເຂົ້າຮ່ວມທັງຫມົດ 80 ສະຫາຍ ຍິງ 2 ສະຫາຍ ເລືອກເອົາຄະນະບໍລິຫານງານພັກແຂວງ ຊຸດໃຫມ່ 15 ສະຫາຍ ແລະ ຍິງ 1 ສະຫາຍໂດຍແມ່ນ :

- ສະຫາຍ ສູນທອນ ເທບອາສາ ເປັນເລຂາຄະນະພັກແຂວງ:
- ສະຫາຍ ມຸນທາ ສີອັງຄະທັດ ເປັນຮອງເລຂາຄະນະພັກແຂວງ

**+ ຫນ້າທີ່ຕົ້ນຕໍໃນໄລຍະນີ້ແມ່ນ:**

- ອອກແຮງປຸກລະດົມການເມືອງ-ແນວຄິດ ໃຫ້ພະນັກງານສະມະຊິກພັກ ແລະ ປະຊາຊົນບັນດາເຜົ່າຢ່າງກວ້າງຂວາງ.
- ປັບປຸງສັບຊ້ອນກຳລັງປະກອບອາວຸດປະຕິວັດດ້ວຍການນຳໃຊ້ເອົາໜ້ອຍຕີຫລາຍ ແລະ ຕອບໂຕ້ທຸກການບຸກໂຈມຕີຂອງສັດຕູ ຢ່າງທັນການ.
- ເດັດດ່ຽວປົກປັກຮັກສາເຂດທີ່ຫມັ້ນຂອງການປະຕິວັດໃຫ້ມີຄວາມແຫນ້ນ, ເພື່ອຕອບຕ້ານກັບທຸກກົນອຸບາຍຂອງພວກສັດຕູ

**ຂະບວນການຕໍ່ສູ້ ຂອງປະຊາຊົນແຂວງສາລະວັນ ແຕ່ໄລຍະ** 1955 -1958: ບັນດາເຜົ່າແຂວງສາລະວັນໄດ້ສົ່ງລູກຫລານຂອງຕົນໄປ ເຂດເຕົ້າໂຮມ 2 ແຂວງທັງຫມົດ1.500 ຄົນ ແລະ ເພດຍິງ 35 ຄົນ, ນອກນັ້ນຍັງໄດ້ ນຳພາປະຊາຊົນ ແລະ ກຳລັງປະກອບອາວຸດບຸກໂຈມຕີ ປົດຄ້າຍຕ່າງໆຂອງສັດຕູໄດ້ຫລາຍແຫ່ງ, ນຳພາປະຊາຊົນລຸກຮື້ຂຶ້ນຕໍ່ສູ້ ແລະ ປຸກລະດົມຂົນຂວາຍກຳລັງຂອງພວກເຂົາໃຫ້ອອກມາຮ່ວມມືກັບການປະຕິວັດໄດ້ຫລາຍຄົນ.

- ແຕ່ປີ 1959-1963: ບັນດາສະຫາຍໃນຄະນະພັກ ໄດ້ເອົາໃຈໃສ່ ຄື: + ນຳພາຂະບວນການລຸກຂຶ້ນທັນທິດຕໍ່ສູ້ເອົາປືນນຳທະຫານບ້ານ ແລະ ທະຫານຫລວງໄດ້ເປັນຂະບວນຟົດຟື້ນໃນທຸກໆເມືອງ, ເດັ່ນກວ່າຫມູ່ແມ່ນຊາວຫນຸ່ມປະຊາຊົນ ບ້ານຫນອງຕືວະ ເມືອງເລົ່າງາມ ໄດ້ຈັດພາເຂົ້າສາມັກຄີຊຸມເຫລົ້າກັນຂຶ້ນກັບທະຫານສັດຕູທີ່ປົດ ເລົ່າງາມ ແລ້ວ ຕະລຸມບອນເອົາພ້າຟັນຄໍສັດຕູຕາຍ 8 ຄົນ ຍຶດປືນໄດ້ 8 ກະບອກ ຊຶ່ງນຳພາໂດຍທ່ານ ນາລີ.

+ ນອກນັ້ນຍັງມີກາໍລັງອາວຸດຂອງປະຊາຊົນແຂວງສາລະວັນ ໄດ້ປິດລ້ອມ ແລະ ບຸກໂຈມຕີກອງທະຫານຮ້ອຍເອກຄາໍຫມັ້ນ ແລະ ຍອມຢຸດຍິງຢູ່ເມືອງເລົ່າງາມ ແລະ ເຫດການອື່ນໆ.

- ປີ ຄ.ສ 1964-1971: ປີ 1965 ກອງທັບ ແລະ ປະຊາຊົນແຂວງສາລະວັນ ໄດ້ຕີຕ້ານບັ້ນຮົບການກວາດລ້າງທີ່ເຂົາເອີ້ນວ່າ: " **ອິນຕາ** " ໃຊ້ກຳລັງ 2 ກອງພັນໃຫຍ່ ແລະ ກຳລັງອື່ນໆຢ່າງຫລວງຫລາຍ.

+ ວັນທີ 23/10/66 ກອງທະຫານເມືອງຄົງເຊໂດນ ແລະ ກອງຫລອນສົມທົບກັບກຳລັງທະຫານອາສາສະຫມັກຂອງຫວຽດນາມ ປິດລ້ອມສັດຕູຢູ່ພູກະພຸ ແລະ ສູ້ຮົບກັນ 2 ວັນ ບັງຄັບໃຫ້ສັດຕູຖອຍແຕກຫນີໄປ.

+ວັນທີ 20/4/67 ກອງຫລອນບ້ານດາເຊັຍໄດ້ຝັງດິນໃຫ້ສັດຕູຢຽບຕາຍຈຳນວນ 9 ຄົນ, ບາດເຈັບ 24 ຄົນ ຈາກນັ້ນແມ່ນໄດ້ບຸກໂຈມຕີສັດຕູເຖິງ 31 ຄັ້ງ ແລະ ດັບສູນສັດຕູຕາຍ 850 ຄົນ, ຂ້າຕາຍ 112 ຄົນ, ເຈັບ 369 ຄົນ, ຍິງຍົນເຕ 28 ຕົກ 4 ລຳ ແລະ ອື່ນໆ.

+ວັນທີ 13/2/1969 ກອງພັນນ້ອຍປ້ອງກັນອາກາດທີ 16 ແຂວງສາລະວັນ ຍິງຍົນອາເມລິກາຕົກເປັນລຳທີ 1.000, ຊຶ່ງເປັນກຽດສະຫງ່າງາມຂອງຊາດ ແລະ ຂອງແຂວງສາລະວັນ.

- ວັນທີ 30/1/1970 ພວກສັດຕູລະດົມກາໍລັງທະຫານ ແລະ ກອງພັນເຄື່ອນທີ່ຈາກເຂດພາກສາມ, ພາກສີ່ເປີດບັ້ນຮົບທີ່ເຂົາເອີ້ນວ່າ: " **ມັງກອນກຽດ** " ເຂົ້າຫລາຍເຂດທີ່ຫມັ້ນຂອງກຳລັງປະຕິວັດຢູ່ເຂດສາລະວັນ ຢ່າງໜັກໜ່ວງ, ຊຶ່ງໄດ້ໃຊ້ເວລາສູ້ຮົບກັນເຖິງ 46 ວັນ ແລະ ກອງທັບປະຕິວັດໄດ້ປັດເຂ່ຍສັດຕູອອກຈາກວົງສູ້ຮົບທັງຫມົດ 774 ຄົນ, ຍິງຍົນຕົກ 4 ລຳ ແລະ ຍຶດປືນໄດ້ 467 ກະບອກໄດ້ປັດເຂຍພວກສັດຕູອອກຈາກພູພຽງບໍລິເວນ, ປົດປ່ອຍຫ້ວຍກອງ, ເລົ່າງາມ ແລະ ໄດ້ ປົດປ່ອຍສາລະວັນ ເປັນຕົ້ນ.

+ ວັນທີ 5/12/1971 ປະຊາຊົນ ແລະ ກອງຫລອນສົມທົບກັບກຳລັງທະຫານອາສາສະຫມັກຫວຽດນາມ ຕໍ່ຕ້ານບັ້ນຮົບກວາດລ້າງ ຂອງສັດຕູທີ່ເອີ້ນວ່າ: " ຕຸລາ " ທີ່ຍຶດເຂົ້າເຂດເມືອງເລົ່າງາມ, ສາລະວັນ, ທ່າແຕງ, ຫ້ວຍກອງ ແລະ ໄດ້ປັດເຂຍສັດຕູອອກຈາກວົງສູ້ລົບ1.298 ຄົນ ດັບສູນພວກມັນ 800 ຄົນ ໃນນັ້ນທະຫານໄທຕາຍ 300 ຄົນ , ຍິງຍົນຕົກ 2 ລຳປົດປ່ອຍສາລະວັນ ແລະ ເລົ່າງາມໄດ້ສຳເລັດ.

+ ປີ 1972 ຕໍ່ຕ້ານບັ້ນຮົບກວາດລ້າງທີ່ສັດຕູເອີ້ນວ່າ:**" ຟ້າງຸ່ມ " ແລະ "ສິງດຳ "** ທີ່ບຸກເຂົ້າຍຶດເຂດທີ່ຫມັ້ນເມືອງສາລະວັນ, ເລົ່າງາມ, ຄົງເຊໂດນ ແລະ ໄດ້ປັດເຂ່ຍສັດຕູອອກຈາກວົງສູ້ລົບ 400 ຄົນ, ຍິງຍົນຕົກ 4 ລຳ.

+ ປີ1973 ກຳລັງຂອງສັດຕູໄດ້ອ່ອນເພຍລົງ ແລະ ຕົກຢູ່ທ່າຈົນຕາແຈ ບັງຄັບໃຫ້ພວກເຂົາປະຕິບັດສັນຍາ ແລະ ອະນຸສັນຍາຢຸດຍິງວຽງຈັນ ປີ ຄ.ສ 1973 ແລະ ບັງຄັບໃຫ້ຝ່າຍວຽງຈັນ ຕ້ອງແບ່ງເຂດໃຫ້ກຳລັງຮັກຊາດຄຸ້ມຄອງ, ສຳລັບຢູ່ແຂວງສາລະວັນ ກໍໄດ້ປັກຫລັກຫມາຍແບ່ງປັນເຂດແດນໃຫ້ກຳລັງຮັກຊາດຕາມທີ່ໄດ້ຕົກລົງກັນຢູ່ໃນ **3 ເຂດຄື:**

- ຢູ່ບ້ານເລົ່າ ເມືອງວາປີ.
- ຢູ່ບ້ານບົວລະພາ ເມືອງຄົງເຊໂດນ.
- ຢູ່ບ້ານແກ້ງຍາວ ເມືອງປາກເຊນອກ.

**+ ວັນທີ 25/6/1974**: ຄະນະປະຕິວັດໄດ້ແຕ່ງຕັ້ງຄະນະກະກຽມເຂົ້າຢຶດອຳນາດຢູ່ເຂດພາກໃຕ້ ຊຶ່ງປະກອບດ້ວຍ 2 ຄະນະ ຄື: ❖ **ຄະນະເຂົ້າຢຶດອຳນາດຢູ່ເມືອງປາກເຊ ແຂວງເຊໂດນ ປະກອບດ້ວຍ 9 ທ່ານຄື:**

- ທ່ານ ຄຳຜູຍ ແກ້ວບົວລະພາ ເປັນຫົວຫນ້າ .
- ທ່ານ ສີເຟືອງ ສີມຸງຄຸນ ເປັນຮອງຫົວຫນ້າ .

❖ **ຄະນະເຂົ້າຢຶດອຳນາດຢູ່ເມືອງ ຄົງເຊໂດນ ແຂວງວາປີຄຳທອງ ມີ 9 ທ່ານຄື:**

- ທ່ານ ບາຈັນ ເປັນຫົວຫນ້າ .
- ທ່ານ ອຸລາ ໂພໄຊຍະວົງ ເປັນຮອງ .

**+ ວັນທີ 3/5/1975** : ກຳລັງຮັກຊາດໄດ້ເຄື່ອນໄຫວເຂົ້າເຂດຄວບຄຸມຂອງສັດຕູຢູ່ເມືອງຄົງເຊໂດນ, ໂດຍແບ່ງການບັນຊາອອກດັ່ງນີ້:

- ກໍາລັງທີຫນຶ່ງ : ທ່ານ ອຸລາ ໂພໄຊຍະວົງ ນໍາກໍາລັງເຂົ້າທາງບ້ານສະເມັຍ.
- ກໍາລັງທີສອງ: ທ່ານ ໂພໄຊ ສີຫາຈັກ ນໍາກໍາລັງເຂົ້າທາງບ້ານຫນອງໂພ ອອກໃສ່ບ້ານນາຕານ.

**ວັນທີ 30/ 6 /1975** ກໍາລັງນັກຮຽນນັກສຶກສາ ແລະ ປະຊາຊົນ 3 ເມືອງ ຄື:

ເມືອງຄົງເຊໂດນ, ວາປີ ແລະ ນະຄອນເພັງ ຈໍານວນ 200 ຄົນ ໄດ້ພ້ອມກັນເດີນປະທ້ວງໃຫ້ຝ່າຍວຽງຈັນຢຸດຕິການປາບປາມນາບຂູ່ປະຊາຊົນ ແລະ ຮຽກຮ້ອງໃຫ້ເຈົ້າແຂວງວາປີຄໍາທອງລາອອກ ແລະ ມອບອໍານາດໃຫ້ແກ່ຄະນະປະຕິວັດ, ໃນຂະນະນັ້ນຄະນະປະຕິວັດ ກໍໄດ້ອ່ານປະກາດການແຕ່ງຕັ້ງເຈົ້າແຂວງປະຕິວັດຂຶ້ນໂດຍແມ່ນ :

- ທ່ານ ບາຈັນ ເປັນເຈົ້າແຂວງໆ ວາປີຄໍາທອງ
- ທ່ານ ອຸລາ ໂພໄຊຍະວົງ ແລະ ທ່ານ ສະຖຽນ ເປັນຮອງເຈົ້າແຂວງ ແລະ ບັນດາສະຫາຍຜູ້ນອື່ນໆຂອງແຂວງວາປີຄໍາທອງ ປະກອບເປັນຄະນະ.

ຫລັງຈາກນັ້ນ ທ່ານ ບາຈັນ ເຈົ້າແຂວງໆວາປີຄໍາທອງ ກໍໄດ້ແຕ່ງຕັ້ງໃຫ້ ທ່ານ ບົວສອນ ເປັນເຈົ້າເມືອງນະຄອນເພັງ, ທ່ານ ກິແກ້ວ ເປັນເຈົ້າເມືອງ ວາປີ ທ່ານ ກິປັ່ນ ເປັນເຈົ້າເມືອງໆຄົງເຊໂດນ, ເມື່ອໄດ້ສັບຊ້ອນ ແລະ ປ່ຽນອໍານາດການປົກຄອງເປັນທີ່ຮຽບຮ້ອຍແລ້ວ, ຈາກນັ້ນຄະນະຍຶດອໍານາດການປົກຄອງ ກໍໄດ້ນາໍພາປະຊາຊົນ ແລະຊັ້ນຄົນຕ່າງໆ ຢູ່ແຂວງວາປີຄໍາທອງ ລຸກຂຶ້ນພ້ອມດຽວກັນກັບຂະບວນການລຸກຂຶ້ນໃນທົ່ວປະເທດຍຶດເອົາອໍານາດ ແລະ ສິດເສລີພາບມາໃຫ້ປະຊາຊົນຢ່າງເຕັມສ່ວນ ລະບອບລາຊາທິປະໄຕທີ່ຊື່ວ່າ “ ພະລາຊະອານາຈັກລາວ “ແລ້ວສະຖາປະນາ “ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ ປີ 1975.

**ໄລຍະປະຕິບັດ 2 ຫນ້າທີ່ຍຸດທະສາດ 1975-2005.**

ນັບແຕ່ພັກປະຊາຊົນ ປະຕິວັດລາວ ໄດ້ກໍາອໍານາດໃນທົ່ວລະບົບການເມືອງ ແລະ ນໍາພາປະຕິບັດ 2 ຫນ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເພື່ອກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມແທນທີ່ຈະສະດວກສະບາຍ ແລະ ຢູ່ດີກິນດີ, ແຕ່ກໍ່ຍັງມີກຸ່ມຄົນບໍ່ດີຈໍານວນຫນຶ່ງໄດ້ຄິດທໍລະຍົດຕໍ່ປະເທດຊາດໄດ້ເຕົ້າໂຮມກໍາລັງຝ່າຍວຽງຈັນເກົ່າ, ຊຶ່ງພວກເຂົາເອີ້ນວ່າ: ກົມ 41 ໂດຍມີ ທ້າວທິດຕັນ, ທ້າວບົວລຽນ ເປັນຫົວໂປ່ ແລະ ທ້າວເຫລືອງ, ທ້າວຫນູກອນ, ທ້າວກິຫຍອງ ເປັນຜູ້ບັນຊາ ແລະ ຈັດຕັ້ງເປັນກອງຂອງກຸ່ມ ທ້າວເສືອເນົາ, ທ້າວສີຕາໄວ, ທ້າວຕາບແກ້ວ ແລະ ກອງອື່ນໆຂຶ້ນ, ໄດ້ປະກາດເປັນກໍາລັງຕໍ່ຕ້ານກັບອໍານາດປົກຄອງໃຫມ່ຢູ່ແຂວງສາລະວັນ ຢ່າງບັງອາດເປີດແປນ ແລະ ພວກເຂົາອອກແຮງຢ່າງຫນັກຫນ່ວງໂຄສະນາໃສ່ຮ້າຍປ້າຍສີແກ່ລະບອບໃຫມ່ຕ່າງໆນາໆວາງແຜນຄາດຕະກໍາທະຫານ-ຕໍາຫລວດ, ພະນັກງານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າຢູ່ເຂດເມືອງຄົງເຊໂດນ, ວາປີ ແລະ ເມືອງລະຄອນເພັງ, ແຕ່ພາຍໃຕ້ການນໍາພາຂອງພັກພວກເຮົາ ໄດ້ບຸກໂຈມຕີ ແລະ ປາບພວກເຂົາຢ່າງຮາບກ້ຽງ.

ດັ່ງນັ້ນເພື່ອເຮັດໃຫ້ການປະຕິບັດ 2 ຫນ້າທີ່ຍຸດທະສາດ ດັ່ງກ່າວນັ້ນ ໃຫ້ມີປະສິດທິຜົນ ແລະ ສອດຄ່ອງກັບສະພາບການຕົວຈິງ, ໂດຍສະເພາະຢູ່ເຂດແຂວງສາລະວັນ, ສູນກາງພັກ ໄດ້ອອກຄໍາສັ່ງສະບັບເລກທີ 160 ລົງວັນທີ 18/10/1975 ເຊັ່ນໂດຍ ທ່ານສາລີ ວົງຄໍາຊາວ ຕົກລົງໃຫ້ໂຮມເອົາ 3 ແຂວງ ເຂົ້າກັນຄືແຂວງສາລະວັນ, ແຂວງຕາເວັນອອກ ແລະ ແຂວງວາປີຄໍາທອງ ໃຫ້ເຂົ້າເປັນ ແຂວງດຽວກັນ ແລ້ວເອີ້ນຊື່ວ່າ: **" ແຂວງ ສາລະວັນ "** .

ພ້ອມກັນນັ້ນກໍໄດ້ປັບປຸງ ແລະ ແຕ່ງຕັ້ງແບບບົງຕົວຄະນະພັກແຂວງຊຸດໃຫມ່**ທີ່ປະກອບດ້ວຍ 27 ສະຫາຍ ຍິງ 2 ສະຫາຍ** ໂດຍແມ່ນ: **ສະຫາຍ ບົວລາງ ບົວລະພາ ເປັນເລຂາພັກແຂວງ** .

- ສະຫາຍ ມຸນທາ ສີອັງຄະທັດ ເປັນຮອງເລຂາພັກແຂວງ ຂອບເຂດການປົກຄອງແຂວງສາລະວັນ ໃນເວລານັ້ນປະກອບດ້ວຍ 10 ເມືອງຄື: ສາລະວັນ, ເລົ່າງາມ, ຕຸ້ມລານ, ຕະໂອ້ຍ, ຄົງເຊໂດນ, ວາປີ, ລະຄອນເພັງ, ດັກຈຶງ, ລະມາມ ແລະ ກະລືມ  ຫນ້າທີ່ຕົ້ນຕໍໃນໄລຍະນີ້ແມ່ນ:

- ສ້າງຄວາມສາມັກຄີປອງດອງຊາດ, ຮໍາບາດແຜສົງຄາມ ແລະ ເລີກຮີ້ໄມ້ມືຂອງສັດຕູຄື: ເລີກຮີ້ໄມ້ມືຂອງສັດຕູຢູ່ບ້ານ, ປິດລ້ອມໂຈມຕີກໍາລັງຢູ່ປ່າ, ຮຽກຮ້ອງຂົນຂວາຍພວກຫລົງຜິດໃຫ້ອອກມາຍອມ.

- ນໍາພາເຮັດການຜະລິດ, ດັດແປງແບບແຜນການຜະລິດ, ຂົນຂວາຍສ້າງຕັ້ງສະຫະກອນກະເສດ, ສ້າງເສດຖະກິດລັດ- ລວມຫມູ່, ກໍ່ສ້າງ - ສ້ອມແປງບັນດາ ພື້ນຖານໂຄງລ່າງ ແລະ ກິດຈະການຕ່າງໆ .

ໃນໄລຍະນີ້ຂະບວນການຫັນເປັນສະຫະກອນແມ່ນເປັນຂະບວນຟົດຟື້ນ... ທົ່ວແຂວງໃນເວລານັ້ນມີຫນ່ວຍສະຫະກອນກະເສດທັງຫມົດ: 300 ຫນ່ວຍ, ລວມຫມູ່ຂອງຕາແສງ ແລະ ບ້ານມີ 200 ຫນ່ວຍ, ທີ່ດີເດັ່ນກ່ວາຫມູ່ແມ່ນ ເມືອງວາປີ ສໍາເລັດການສ້າງຕັ້ງສາຫະກອນກະເສດ ຢູ່ຂັ້ນບ້ານໄດ້ສໍາເລັດ 100% ແລະ ໄດ້ກວມເອົາ 50% ຂອງສະຫະກອນທັງຫມົດໃນທົ່ວແຂວງ .

ເພື່ອເຮັດໃຫ້ການພັດທະນາມີການຂະຫຍາຍຕົວ ແລະ ສົມດຸນກັນ ລະຫວ່າງເຂດທົ່ງພຽງ, ພູພຽງ ແລະ ພູດອຍ, ສູນກາງພັກ ຈຶ່ງໄດ້ອອກມະຕິຕົກລົງ ສະບັບວັນທີ 23/4/1984 ເຊັນໂດຍ **ທ່ານປະທານ ໄກສອນ ພົມວິຫານ** ໃຫ້ແບ່ງ ແຂວງສາລະວັນ ອອກເປັນ 2 ແຂວງ ຄື: ເຊກອງ ແລະ ສາລະວັນໃນນັ້ນ :

**+ ແຂວງເຊກອງ ມີ 3 ເມືອງ ຄື:** ກະລຶມ, ລະມາມ, ດັກຈຶງ, ມີຄະນະພັກແຂວງຊຸດບົ່ງຕົວທັງຫມົດ 13 ສະຫາຍ, ຍິງ 1 ສະຫາຍ ໂດຍແມ່ນ:

- ສະຫາຍ ບົວລາງ ບົວລະພາ ເປັນເລຂາຄະນະພັກແຂວງ

**+ ແຂວງ ສາລະວັນ ມີ 7 ເມືອງ ຄື:** ສາລະວັນ, ເລົ່າງາມ, ຄົງເຊໂດນ, ວາປີ, ລະຄອນເພັງ, ຕຸ້ມລານ ແລະ ຕະໂອ້ຍ ຊຶ່ງປະກອບມີ ຄະນະພັກແຂວງຊຸດບົ່ງຕົວທັງຫມົດ 13 ສະຫາຍ ຍິງ 1 ສະຫາຍ ໂດຍແມ່ນ:

- ສະຫາຍ ອຸລາ ໂພໄຊຍະວົງ ເປັນເລຂາຄະນະພັກແຂວງ.
- ສະຫາຍ ໂພໄຊ ສີຫາຈັກ ເປັນຮອງເລຂາພັກແຂວງ
- ໃນກາງ ປີ 1985, ສູນກາງພັກໄດ້ອອກຄໍາສັ່ງ ສະບັບເລກທີ 35/ກມສພ ລົງວັນທີ 11/6/1985 ໄດ້ປັບປຸງບົ່ງຕົວແຕ່ງຕັ້ງເລຂາຄະນະພັກແຂວງໃຫມ່ຄືໃຫ້ :
- ສະຫາຍ ຄໍາຜູຍ ແກ້ວບົວລະພາ ເປັນເລຂາພັກແຂວງສາລະວັນ .
- ສະຫາຍ ອຸລາ ໂພໄຊຍະວົງ ເປັນຮອງເລຂາພັກແຂວງ :

ຕໍ່ມາຮອດປີ 1987 ແຂວງສະຫວັນນະເຂດ ໄດ້ເຫັນດີມອບເມືອງສະຫມ້ອຍ ໃຫ້ແຂວງສາລະວັນ ແລະ ໄດ້ຮັບເອົາໃນການຄຸ້ມຄອງເປັນທາງການ ໃນປີ 1989, ຈາກນັ້ນແຂວງສາລະວັນໄດ້ມີຂອບເຂດການປົກຄອງລວມມີ 8 ເມືອງ ແລະ ໄດ້ລົບລ້າງອານາດການປົກຄອງຂັ້ນຕາແສງ ອີກດ້ວຍ .

**✧ ໄລຍະກອງປະຊຸມໃຫຍ່ຄັ້ງທີ III ຂອງ ອົງຄະນະພັກແຂວງສາລະວັນ ແຕ່ ປີ ຄ.ສ 1986-1992**:

ກອງປະຊຸມໃຫຍ່ຄັ້ງ III ຂອງອົງຄະນະພັກແຂວງສາລະວັນ ໄດ້ເປີດຂຶ້ນໃນຄັ້ງວັນທີ 17/10/1986 ຢູ່ທີ່ສະໂມສອນອົງແກ້ວ ເທດສະບານເມືອງສາລະວັນ, ພາຍໃຕ້ການເປັນກຽດເຂົ້າຮ່ວມຂອງທ່ານປະທານໄກສອນ ພົມວິ ຫານ ປະທານຄະນະບໍລິຫານງານພັກປະຊາຊົນປະຕິວັດລາວ, ປະທານປະເທດແຫ່ງ ສປປ ລາວ, ຊຶ່ງມີຜູ້ແທນເຂົ້າຮ່ວມທັງຫມົດ 110 ສະຫາຍ, ຍິງ 8 ສະຫາຍ, ຊຶ່ງເປັນຕົວແທນໃຫ້ແກ່ສະມາຊິກພັກທົ່ວແຂວງສາລະວັນທັງຫມົດ 2.074 ສະຫາຍ, ກອງປະຊຸມຄັ້ງນີ້ ໄດ້ຄັດເລືອກເອົາຄະນະພັກແຂວງທັງຫມົດ 23 ສະຫາຍຍິງ 1 ສະຫາຍ, ໂດຍແມ່ນ:

- ສະຫາຍ ຄໍາຜູຍ ແກ້ວບົວລະພາ ເປັນເລຂາພັກແຂວງ :

- ສະຫາຍ ອຸລາ ໂພໄຊຍະວົງ ເປັນຮອງເລຂາພັກແຂວງ :

**+ ຫນ້າທີ່ການເມືອງຕົ້ນຕໍໃນໄລຍະນີ້ແມ່ນ:**

- ຮັບປະກັນແກ້ໄຂດ້ານທັນຍາຫານ ແລະ ອາຫານໃຫ້ໄດ້ໂດຍພື້ນຖານ.
- ຂະຫຍາຍປ່າໄມ້ຮອບດ້ານ, ກ້າວໄປຢຸດຕິການຖາງປ່າເຮັດໄຮ.
- ແບ່ງເຂດເສດຖະກິດ ແລະ ນໍາໃຊ້ຊັບພະຍາກອນຢ່າງມີປະສິດທິຜົນ.
- ຂະຫຍາຍຕາຫນ່າງຄົມມະນາຄົມ ແລະ ຂົນສົ່ງໃຫ້ທົ່ວເຖິງ.
- ເປີດກວ້າງຕາຫນ່າງການຄ້າ ແລະ ບໍລິການດ້ານຕ່າງໆໃຫ້ໄດ້ດີ.
- ຂະຫຍາຍການສຶກສາ, ວັດທະນະທໍາ ແລະ ສາທາລະນະສຸກ .
- ປັກປຸ ງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ເຂັ້ມແຂງ .
- ນາໍໃຊ້ຄວາມກ້າວຫນ້າທາງດ້ານວິທະຍາສາດ-ເຕັກນິກ.
- ກໍ່ສ້າງພັກ-ພະນັກງານໃຫ້ຫນັກແຫນ້ນເຂັ້ມແຂງ.

**+ ຂະບວນການທີ່ພົ້ນເດັ່ນໃນໄລຍະນີ້ແມ່ນ:**

- ການກໍ່ສ້າງເສັ້ນທາງຄົມມະນາຄົມ-ທາງເລກ 20, ສະຫນາມບິນສາລະວັນ.
- ສ້າງເຂື່ອນໄຟຟ້າເຊເສັດ I , ຊົນລະປະທານຫນອງແດງ ແລະ ດົງມອນ .
- ສ້າງໂຮງຫມໍແຂວງ ສາລະວັນ, ໂຮງຮຽນເທດສະບານແຂວງ ແລະ ອື່ນໆ .

-ຂະບວນຊາວໄຮ່ລົງເຮັດນາຢູ່ເມືອງຕະໂອຍແລະສະຫມ້ອຍຢ່າງເປັນຂະບວນຟົດຟື້ນ,ປະຊາຊົນມີຄວາມມ່ວນ ຊື່ນຕໍ່ຫມາກຜົນທີ່ໄດ້ຮັບຈົນມີຄວາມເລົ່າລືກັນມາຕິດປາກວ່າ:**"ນາແຊງລຸງລີ,ນາປີລຸງທິດບົວ,ຈົກຊົ້ວານລຸງສຸນ ".**

- ຂະບວນການລົບລ້າງການເຊື່ອຖືງົມງາຍຂອງປະຊາຊົນບັນດາເຜົ່າຕ່າງໆແມ່ນໄດ້ຫລຸດລົງຫລາຍໂດຍສະເພາະແມ່ນຢູ່ເຂດເມືອງຕະໂອ້ຍເປັນຕົ້ນ.

- ຂະບວນດັບສູນພວກປະຕິການພັດຖິ່ນຫວຽດນາມຄື: ໄດ້ດັບສູນປະຕິການພັດຖິ່ນຮວາງເກີມົງຄັ້ງທີ 1 ແລະ ດັບສູນພວກປະຕິການພັດຖິ່ນຫວຽດນາມຄັ້ງທີ 2 ໂດຍ ທ້າວເຈີນກວາງໂດ, ລວມທັງ 2 ຄັ້ງ ກວາດລ້າງໄດ້ທັງຫມົດ 276 ຄົນ ໃນນັ້ນ: ຂ້າຕາຍ142 ຄົນ, ຈັບໄດ້ 118 ຄົນ, ຫາຍສາບສູນ16 ຄົນ ແລະ ຂະບວນການອື່ນໆ.

**✧ ໄລຍະກອງປະຊຸມໃຫຍ່ຄັ້ງທີ IV ຂອງ ອົງຄະນະພັກແຂວງສາລະວັນ ແຕ່ປີ ຄ.ສ 1993-1997 .**

ກ້ອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກແຂວງສາລະວັນ ໄດ້ໄຂຂຶ້ນໃນວັນທີ 21/12/1993 ທີ່ສະໂມສອນອົງແກ້ວ ເທດສະບານ ແຂວງສາລະວັນ, ມີຜູ້ແທນເຂົ້າຮ່ວມທັງຫມົດ 118 ສະຫາຍ, ຍິງ 9 ສະຫາຍ ໄດ້ຄັດເລືອກເອົາ ຄະນະບໍລິຫານງານພັກແຂວງ 17 ສະຫາຍ, ຍິງ 1 ສະຫາຍ ໂດຍແມ່ນ:

- ສະຫາຍ ທອງຫວັງ ສີຫາຈັກ ເປັນເລຂາພັກແຂວງ .
- ສະຫາຍ ສີເຟືອງ ສີມຸງຄຸນ ເປັນຮອງເລຂາພັກແຂວງ :

**+ ຫນ້າທີ່ການເມືອງໃນໄລຍະນີ້ແມ່ນ :**

- ເພີ່ມທະວີວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ - ເຮັດໃຫ້ເສດຖະກິດ - ສັງຄົມຂະຫຍາຍຕົວ ແລະ ສອດຄ່ອງກັບທ້ອງຖິ່ນ - ເປີດກວ້າງການພົວພັນ ແລະ ຮ່ວມມືກັບຕ່າງປະເທດ - ແກ້ໄຂບັນຫາຕ່າງໆທາງດ້ານວັດທະນະທໍາ ແລະ ສັງຄົມໃຫ້ກົມກຶນ.

- ເພີ່ມທະວີວຽກງານສຶກສາອົບຮົມທາງດ້ານການເມືອງ- ນໍາພາແນວຄິດໃນຫມູ່ ສະຫາຍສະມາຊິກພັກ, ພະນັກງານ ແລະ ລັດຖະກອນ, ທະຫານ, ຕໍາຫລວດ ແລະ ທຸກຊັ້ນຄົນ.

+ ຜົນງານດີເດັ່ນໃນໄລຍະນີ້ມີ:

- ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນຮັບປະກັນ ໂດຍພື້ນຖານ, ກໍາລັງມີການຂະຫຍາຍຕົວ ແລະ ເຂັ້ມແຂງ.
- ວຽກງານວຽກງານເສດຖະກິດກັບຕ່າງປະເທດ ໄດ້ຂະຫຍາຍຕົວ ໂດຍສະເພາະ ກັບປະເທດຫວຽດນາມ , ປະເທດໄທ ແລະ ປະເທດອື່ນໆ.
- ຂົງເຂດວັດທະນະທໍາ-ສັງຄົມ ກໍ່ໄດ້ຂະຫຍາຍຕົວສູງເຊັ່ນ: ມີໂຮງຮຽນ 445 ແຫ່ງ, ມີໂຮງໝໍ ແຂວງ ແລະ ເມືອງ, ສະຖານີວິທະຍຸ-ໂທລະພາບ ແລະ ວຽກງານອື່ນໆ.

**✧ ກອງປະຊຸມໃຫຍ່ຄັ້ງ V ຂອງອົງຄະນະພັກແຂວງສາລະວັນ ແຕ່ປີ ຄ.ສ 1998-2002 .**

ກອງປະຊຸມໃຫຍ່ອົງຄະນະພັກແຂວງສາລະວັນ ຄັ້ງທີ V ໄດ້ໄຂຂຶ້ນແຕ່ ວັນທີ 23-25/3/1998 ທີ່ສະໂມສອນອົງແກ້ວ ໂດຍການເປັນກຽດເຂົ້າຮ່ວມຂອງ ສະຫາຍ ທອງສິງ ທໍາມະວົງ ກໍາມະການກົມການເມືອງສູນການພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຜູ້ແທນເຂົ້າຮ່ວມທັງຫມົດ 127 ສະຫາຍ, ຍິງ 13 ສະຫາຍ, ຊຶ່ງຕາງຫນ້າໃຫ້ສະມະຊິກພັກໃນທົ່ວແຂວງມີ 4.433 ສະຫາຍໄດ້ເລືອກເອົາຄະນະບໍລິຫານງານພັກແຂວງ 21 ສະຫາຍ , ຍິງ 1 ສະຫາຍ, ໂດຍແມ່ນ:

- ສະຫາຍ ທອງຫວັງ ສີຫາຈັກ ເປັນເລຂາພັກແຂວງ.
- ສະຫາຍ ໂພໄຊ ສີຫາຈັກ  ເປັນຮອງເລຂາພັກແຂວງ ຜູ້ທີ 1.
- ສະຫາຍພັນເອກ ບົວລາ ໄຊສົງຄາມ ເປັນຮອງເລຂາພັກແຂວງ ຜູ້ທີ 2.

**+ ຄາດຫມາຍສູ້ຊົນໃນໄລຍະນີ້ແມ່ນ:**

- ຕ້ອງຮັບປະກັນໃຫ້ທົ່ວສັງຄົມມີຄວາມສະຫງົບປົກກະຕິ.
- ເຮັດໃຫ້ເສດຖະກິດ ມີການຂະຫຍາຍຕົວໃນລະດັບແຕ່ 10-11% ຕໍ່ປີ, ລາຍໄດ້ສະເລ່ຍຕໍ່ຄົນຕໍ່ປີ ໃຫ້ໄດ້ 500 ໂດລາ ຂຶ້ນເມືອ ໃນປີ 2000 .
- ຢຸດຕິການຖາງປ່າເຮັດໄຮ່ໃຫ້ໄດ້ໃນລະດັບພື້ນຖານ.
- ສຸມໃສ່ສ້າງເສັ້ນທາງອອກສູ່ທາງຕະເວັນອອກ ແລະ ຕາເວັນຕົກໃຫ້ທະລຸໂລ່ງ .
- ຂຸດຄົ້ນ ແລະ ສ້າງລາຍໄດ້ໃຫ້ດຸ່ນດ່ຽງລາຍຈ່າຍເທື່ອລະກ້າວ .
- ຕັ້ງຫນ້າລຶບລ້າງຄວາມບໍ່ຮູ້ຫນັງສືຂອງປະຊາຊົນ ຢູ່ໃນເກນອາຍຸແຕ່ 15-40 ປີ ໃຫ້ໄດ້ເຂົ້າຮຽນກວ່າ 80% ຂຶ້ນໄປ ແລະ ລຶບລ້າງພະຍາດຕົ້ນຕໍໃຫ້ສໍາລັດ.

**+ ຜົນງານທີ່ພົ້ນເດັ່ນໃນໄລຍະນີ້:**

- ເສດຖະກິດຂະຫຍາຍຕົວ ໃນລະດັບ 6,17% ຕໍ່ປີ ແລະລາຍໄດ້ສະເລ່ຍ ເທົ່າ ກັບ 254 ໂດລາ ຕໍ່ຄົນ/ຕໍ່ປີ.
- ປັບປຸງ ແລະ ສ້າງຊົນລະປະທານໃຫມ່ໄດ້ 86 ແຫ່ງສາມາດຫົດເນື້ອທີ່ ໄດ້ແຕ່ 8.000-10.000 ເຮັກຕາ ຂຶ້ນໄປ .
- ຂະຫຍາຍຕາຫນ່າງໄຟຟ້າ ໄດ້ 7 ເມືອງ ມີ 150 ບ້ານ ແລະ 753 ຫລັງຄາເຮືອນ.
- ດ້ານຄົມມະນາຄົມຂົນສົ່ງໄປສະນີ ແລະ ໂທລະຄົມມີການຂະຫຍາຍຕົວ.
- ຂະຫຍາຍໂຮງຮຽນຊົນເຜົ່າໄດ້ 2 ແຫ່ງ ຢູ່ຕະໂອ້ຍ ແລະ ສະຫມ້ອຍ.
- ຂະຫຍາຍໂຮງຫມໍ ແລະ ສຸກສາລາໄປສູ່ຊົນນະບົດໄດ້ດີ.
- ສໍາເລັດການສ້າງສະຖານີໂທລະພາບ ແລະ ວິທະຍຸ F-M ຢູ່ແຂວງ.
- ໄດ້ຮັບຂັນຊະນະເລີດໃນງານປະກວດນັກຮ້ອງສຽງດີ ທີ່ນະຄອນວຽງຈັນ.

- ຮັບຫລຽນຄຳ 2 ຫລຽນ, ຫລຽນເງິນ 1 ຫລຽນ ໃນງານປະກວດສຽງເພງ“ ເສັ້ນທາງເລກ 9 ສີຂຽວ ” ຂອງຫນ່ວຍສິລະປະວັນນະຄະດີແຂວງສາລະວັນ ທີ່ແຂວງກວາງຈີ້ ສ.ສ.ຫວຽດນາມ ,

- ໄດ້ຄອງຂັນຊະນະເລີດປະເພດບານເຕະ ຂອງປະທານພັກໃນວັນສ້າງຕັ້ງ - ພັກຄົບຮອບ 45 ປີ ທີ່ວຽງຈັນໃນວັນທີ 22/3/2000.

- ວຽກງານກໍ່ສ້າງພັກ-ພະນັກງານເພີ້ມຂຶ້ນ 29% ທຽບໃສ່ປີ 1996 .

- ການພົວພັນ ແລະ ຮ່ວມມືເສດຖະກິດກັບຕ່າງປະເທດໄດ້ ຂະຫຍາຍຕົວກ້ວາງອອກ, ພິເສດແແຂວງເຮົາໄດ້ເປີດດ່ານຊາຍແດນລາໄລ ລະຫວ່າງເມືອງສະຫມ້ອຍ ແລະ ແຂວງກວາງຈີ້, ສືບຕໍ່ຮ່ວມມືກັບບັນດາແຂວງ ຂອງປະເທດ ສ.ສ.ຫວຽດນາມ ແລະ ບັນດາແຂວງໃກ້ຄຽງຂອງປະເທດໄທ .

- ນອກນັ້ນຍັງມີຜົນງານໃນດ້ານອື່ນໆແຕ່ລະຂົງເຂດເຊັ່ນ: ອົງການຈັດຕັ້ງມະຫາຊົນ, ກິລາ ແລະ ຂົງເຂດຍຸດຕິທາໍເປັນຕົ້ນ .

**✧ ກອງປະຊຸມໃຫຍ່ຄັ້ງ VI ຂອງ ອົງຄະນະພັກແຂວງສາລະວັນ ແຕ່ປີ ຄ.ສ 2005-2010**

ກອງປະຊຸມໃຫຍ່ອົງຄະນະພັກແຂວງສາລະວັນ ຄັ້ງທີ VI , ໄດ້ໄຂຂຶ້ນພາຍໃຕ້ບັນຍາກາດທີ່ອົບອຸ່ນໃນວັນທີ 14-16/12/2005 ທີ່ສະໂມສອນຂອງແຂວງ ມີຜູ້ແທນເຂົ້າຮ່ວມທັງຫມົດ 196 ສະຫາຍ, ຍິງ 11 ສະຫາຍ, ຊຶ່ງເປັນຕົວແທນໃຫ້ແກ່ບັນດາສະຫາຍສະມາຊິກພັກທັງຫມົດໃນທົ່ວແຂວງ 5.837 ສະຫາຍ, ໂດຍແມ່ນ ສະຫາຍ ບົວສອນ ບຸບຜາວັນ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກ ລັດຖະມົນຕີ, ຜູ້ປະຈຳການລັດຖະບານ ໄດ້ໃຫ້ກຽດເຂົ້າຮ່ວມໃນຄັ້ງນີ້, ກອງປະຊຸມໃຫຍ່ຄັ້ງນີ້ໄດ້ເລືອກເອົາ :

- ສະຫາຍ ຄຳປຸ່ນ ດ້ວງປັນຍາ ເປັນເລຂາພັກແຂວງ
- ສະຫາຍ ພູວຽງ ສາຍທຳມະວົງ ເປັນຮອງເລຂາພັກແຂວງ 1
- ສະຫາຍ ບົວສີ ຄ່ຽມມະນີຂັນໄຊ ເປັນຮອງເລຂາພັກແຂວງ 2

**1. ຄາດຫມາຍສູ້ຊົນໄລຍະນີ້ .**

- ເຮັດໃຫ້ແຂວງສາລະວັນມີສະຖຽນລະພາບທາງດ້ານການເມືອງ, ທຸກບໍລິເວນມີຄວາມສະງົບຫນັກແຫນ້ນ ແລະ ມີຄວາມປອດໄພທາງສັງຄົມ .

- ເຮັດໃຫ້ເສດຖະກິດຂະຫຍາຍຕົວໃນລະດັບສະເລ່ຍ 9-10 % ຕໍ່ປີ, ລາຍໄດ້ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 800 ໂດລາ ຕໍ່ປີ

- ເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ 15% ຂອງGDP .

- ລົບລ້າງບ້ານທຸກຍາກ ແລະ ຢຸດຕິການຖາງປ່າເຮັດໄຮ່ ໃຫ້ໄດ້ຢ່າງສິ້ນເຊີງ ແລະ ສ້າງບ້ານພັດທະນາໃຫ້ໄດ້ 40 % ຂຶ້ນເມືອ ຂອງຈຳນວນບ້ານທັງຫມົດ.

- ພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮູ້ຄວາມສາມາດ ແລະ ຫນັກແຫນ້ນ

- ປັບປຸງລະບົບການເມືອງ ແລະ ອົງການຈັດຕັ້ງມະຫາຊົນໃຫ້ເຂັ້ມແຂງ.

- ປຸກລະດົມທຸກໆພາກສ່ວນເສດຖະກິດ - ສັງຄົມ ໃຫ້ປະກອບສ່ວນເຂົ້າໃນການພັດທະນາຢ່າງກວ້າງຂວາງ ໂດຍສະເພາະການຊຸກ ຍູ້ສົ່ງເສີມຜະລິດເປັນສິນຄ້າ.

**2.ຜົນງານທີ່ພົ້ນເດັ່ນຈຳນວນຫນຶ່ງໃນໄລຍະ 2006-2010 ມີ:**

- ເສດຖະກິດໄດ້ຂະຫຍາຍຕົວໃນລະດັບ 7- 8% ຕໍ່ປີ, ລາຍໄດ້ສະເລ່ຍ ເທົ່າກັບ 520 ໂດລາ ຕໍ່ຄົນຕໍ່ປີ .

- ໄດ້ປັບປຸງລະບົບຊົນລະປະທານເກົ່າ 135 ແຫ່ງ ແລະ ສ້າງໃຫມ່ຈາ ໍນວນຫນຶ່ງ ຊຶ່ງສາມາດຫົດເນື້ອທີ່ໄດ້ແຕ່ 8.000-10.000 ເຮັກຕາ ຂຶ້ນໄປ.

- ຂະຫຍາຍຕາຫນ່າງໄຟຟ້າໄດ້ໃຊ້ແລ້ວ 8 ເມືອງ, ກວມ 40% ຂອງຈໍານວນບ້ານທັງຫມົດໃນທົ່ວແຂວງ ແລະ ກວມເອົາແຕ່ 45% ຂອງຫລັງຄາເຮືອນທັງຫມົດ.

- ດ້ານຄົມມະນາຄົມ-ຂົນສົ່ງ-ໄປສະນີ ໂທລະຄົມ ແລະ ກໍ່ສ້າງມີການຂະຫຍາຍຕົວໂດຍສະເພາະການສ້າງທາງເລກທີ 15 ສາລະວັນ- ຊາຍແດນຫວຽດນາມ .

- ຂະຫຍາຍໂຮງຫມໍ, ສຸກສາລາ ແລະ ໂຮງຮຽນຕ່າງໆໄປສູ່ຊົນນະບົດໄດ້ດີ .

- ໄດ້ສາ ໍເລັດການປັບປຸງສະຖານີໂທລະພາບ ແລະ ວິທະຍຸ F-M ຢູ່ແຂວງ, ຢູ່ເມືອງຕະໂອ້ຍ ແລະ ເມືອງສະຫມ້ອຍ.

- ວຽກງານກໍ່ສ້າງພັກ, ພະນັກງານ ເພີ້ມຂຶ້ນ 35 % ທຽບໃສ່ປີ 2005 .

- ການພົວພັນ-ຮ່ວມມື ກັບຕ່າງປະເທດ ໄດ້ຂະຫຍາຍຕົວກ້ວາງອອກ, ພິເສດແມ່ນໄດ້ເປີດດ່ານຊາຍແດນທ້ອງຖິ່ນໂກຕາຍ ລະຫວ່າງເມືອງສະຫມ້ອຍ ແລະ ເມືອງອາເລື້ອຍ ແຂວງເທື່ອທຽນເຫວ້ ແລະ ສືບຕໍ່ຮ່ວມມືກັບບັນດາແຂວງຕ່າງໆຂອງ ສ.ສ.ຫວຽດນາມ ແລະ ບັນດາຈັງຫວັດຂອງປະເທດໄທ ແລະ ປະເທດອື່ນໆ .

**ກອງປະຊຸມໃຫຍ່ຄັ້ງ VII ຂອງອົງຄະນະພັກແຂວງສາລະວັນ ແຕ່ປີ ຄ.ສ 2010-2015**

ກອງປະຊຸມໃຫຍ່ອົງຄະນະພັກແຂວງສາລະວັນ ຄັ້ງທີ VII ໄດ້ໄຂຂຶ້ນພາຍໃຕ້ບັນຍາກາດທີ່ອົບອຸ່ນໃນວັນທີ 15-16/12/2010 ທີ່ສະໂມສອນຂອງແຂວງ ມີເທນເຂົ້າຮ່ວມທັງຫມົດ 279 ສະຫາຍ, ຍິງ 22 ສະຫາຍ, ຊຶ່ງເປັນຕົວແທນໃຫ້ແກ່ບັນດາສະຫາຍສະມາຊິກພັກ ທັງຫມົດໃນທົ່ວແຂວງ 7.056 ສະຫາຍ, ໂດຍແມ່ນ ສະຫາຍ ພົນໂທ ດວງໃຈພິຈິດ, ກໍາມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງປ້ອງກັນປະເທດໄດ້ໃຫ້ກຽດເຂົ້າຮ່ວມໃນຄັ້ງນີ້, ກອງປະຊຸມໃຫຍ່ຄັ້ງນີ້ໄດ້ເລືອກເອົາ :

- ສະຫາຍ ຄໍາບຸ່ນ ດ້ວງປັນຍາ ເປັນເລຂາພັກແຂວງ
- ສະຫາຍ ບົວສີ ຄ່ຽມມະນີຂັນໄຊ ເປັນຮອງເລຂາພັກແຂວງ
- ສະຫາຍ ບົວທອງ ຄູນຍອດປັນຍາ ເປັນຮອງເລຂາພັກແຂວງ
- ສະຫາຍ ບຸນທຽມ ພົມມະສະຖິດ ເປັນປະທານກວດກາພັກ

**1/ - ຄາດຫມາຍສູ້ຊົນໄລຍະ 2010-2015**

- ຮັບປະກັນໃຫ້ທົ່ວແຂວງມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະງົບເປັນລະບຽບຮຽບຮ້ອຍທາງດ້ານສັງຄົມທີ່ຫນັກແຫນ້ນ.

- ເຮັດໃຫ້ເສດຖະກິດຂະຫຍາຍຕົວຕໍ່ເນື່ອງສະເລ່ຍເພີ້ມຂຶ້ນ 10% ຕໍ່ປີຂຶ້ນໄປ

- ລາຍຮັບ ສະເລ່ຍຂອງພົນລະເມືອງໃຫ້ບັນລຸ 1.100 ໂດລາ ສະຫະລັດຕໍ່ຄົນ ໃນປີ 2015 .

- ໂຄງປະກອບດ້ານກະສິກໍາ - ປ່າໄມ້ ເພີ້ມຂຶ້ນ 8 % ຕໍ່ປີ, ອຸດສະຫະກໍາເພີ້ມຂຶ້ນ13 % ຕໍ່ປີ ແລະ ການບໍລິການເພີ້ມຂຶ້ນ 12 % ຕໍ່ປີ .

- ຄອບຄົວພົນລະເມືອງໃຫ້ມີຄວາມຮັ່ງມີ ແລະ ພໍຢູ່ພໍກິນ .

- ຮັບປະກັນຄວາມປົກຄຸມຂອງປ່າໄມ້ ໃຫ້ກວມ 67% ຂອງເນື້ອທີ່ທັງຫມົດ.

- ລາຍຮັບເຂົ້າງົບປະມານໃຫ້ໄດ້ 268,054 ຕື້ກີບ ເພີ້ມຂຶ້ນ ສະເລ່ຍ11.5 % ຕໍ່ປີ.

- ສູ້ຊົນສ້າງແຂວງ ສາລະວັນ ແລະ ເມືອງສາລະວັນ,ໂດຍສະເພາະເທສະບານແຂວງ ໃຫ້ເປັນເມືອງທີ່ສະອາດສວຍງາມ ກາຍເປັນຈຸດໃຈກາງທາງດ້ານການເມືອງ, ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ, ເສດຖະກິດ,

ວັດທະນະທຳ-ສັງຄົມ; ກາຍເປັນແຂວງຫນຶ່ງໃນ 4 ແຂວງພາກໃຕ້ ກໍຄືອະນຸພາກພື້ນທີ່ມີເສັ້ນທາງເຂົ້າ-ອອກ ເພື່ອການແຂ່ງຂັນ ແລະ ເຊື່ອມໂຍງກັບສາກົນ .

- ສູ້ຊົນຢ່າງຕັ້ງຫນ້າພັດທະນາບັນດາເມືອງ ໃຫ້ຫລຸດພົ້ນອອກຈາກຄວາມທຸກຍາກ, ໂດຍສະເພາະໃນ 3 ເມືອງພູດອຍ, ເຊິ່ງມີ 2 ເມືອງ ທີ່ນອນໃນບັນຊີ 47 ເມືອງທຸກຍາກທີ່ສຸດຂອງທົ່ວປະເທດ

- ສ້າງບ້ານພັດທະນາໃຫ້ໄດ້ 40 % ຂອງຈຳນວນບ້ານທັງຫມົດ, ສ້າງກຸ່ມບ້ານ ແລະ ບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍເທື່ອລະກ້າວໆ, ສ້າງພະແນກການໃຫ້ໄດ້ຮັບນາມມະຍົດເປັນພະແນກວັດທະນະທຳ ແລະ ກົມກອງແຂງໃຫ້ໄດ້ຫລາຍ

- ປະຕິບັດໃຫ້ໄດ້ 8 ເປົ້າຫມາຍ ສະຫະສະຫວັດແຫ່ງການພັດທະນາ .

- ຕັ້ງຫນ້າປະຕິບັດ 4 ບຸກທະລຸ ທີ່ພັກວາງອອກໃຫ້ສຳເລັດ

**2/-ບາງຜົນງານທີ່ພົ້ນເດັ່ນຈຳນວນໜຶ່ງ ໃນໄລຍະ 2010-2015 ມີ:**

- ເສດຖະກິດໄດ້ຂະຫຍາຍຕົວໃນລະດັບ 11,23% ຕໍ່ປີ, ລາຍໄດ້ສະເລ່ຍເທົ່າກັບ 9.450.000 ກີບ ຫຼື ເທົ່າກັບ 1.170 ໂດລາ ຕໍ່ຄົນ ຕໍ່ປີ .

- ໄດ້ປັບປຸງລະບົບຊົນລະປະທານເກົ່າ 145 ແຫ່ງ ແລະ ສ້າງໃຫມ່ຈຳນວນຫນຶ່ງ ຊຶ່ງສາມາດຫົດເນື້ອທີ່ແຕ່ 10.000 ເຮັກຕາຂຶ້ນໄປ, ລະດູແລງແຕ່ 4.000 ເຮັກຕາຂຶ້ນໄປ.

- ຂະຫຍາຍຕາຫນ່າງໄຟຟ້າໄດ້ໃຊ້ແລ້ວ 8 ເມືອງ, ກວມ 65% ຂອງຈຳນວນບ້ານທັງຫມົດໃນທົ່ວແຂວງ ແລະ ກວມເອົາແຕ່ 55% ຂອງຫລັງຄາເຮືອນທັງຫມົດ.

- ດ້ານໂຍທາທິການ-ຂົນສົ່ງ ແລະ ກໍ່ສ້າງເຄຫະສະຖານມີການຂະຫຍາຍຕົວເຊັ່ນ: ການສ້າງທາງເລກທີ 15 ສາລະວັນ-ນາປົ່ງ, ສາລະວັນ-ຕຸ້ມລານ ແລະ ອື່ນໆ.

- ຂະຫຍາຍໂຮງຫມໍ, ສຸກສາລາ ແລະ ໂຮງຮຽນຕ່າງໆໄປສູ່ຊົນນະບົດໄດ້ດີ .

- ໄດ້ສຳເລັດການປັບປຸງສະຖານີໂທລະພາບ ແລະ ວິທະຍຸ ຢູ່ແຂວງ, ວິທະຍຸ ຢູ່ເມືອງຕະໂອ້ຍ ແລະ ເມືອງສະຫມ້ວຍ, ການສ້າງບ້ານວັດທະນະທຳກໍ່ເພີ່ມຂຶ້ນ, ສ້າງອະນຸສາວະລີອົງແກ້ວ,ສອນແຄນ ແລະ ບັນດາແຫຼ່ງທ່ອງທ່ຽວຈຳນວນຫນຶ່ງ .

- ວຽກງານກໍ່ສ້າງພັກ, ພະນັກງານເພີ່ມຂຶ້ນ 45 % ທຽບໃສ່ປີ 2010 .

- ການພົວພັນ- ຮ່ວມມືກັບຕ່າງປະເທດໄດ້ຂະຫຍາຍຕົວກ້ວາງອອກ, ພິເສດແມ່ນໄດ້ເປີດດ່ານສາກົນລະໄລລະຫວ່າງເມືອງສະຫມ້ວຍ ແລະ ເມືອງອາເລືອຍ ແຂວງກວາງຈີ້ ແລະ ສືບຕໍ່ຮ່ວມມືກັບບັນດາແຂວງຕ່າງໆຂອງ ສ.ສ ຫວຽດນາມ ບັນດາຈັງຫວັດຈຳນວນຫນຶ່ງ ຂອງປະເທດໄທ ແລະ ປະເທດອື່ນໆໄດ້ດີກ່ວາເກົ່າ .

**✧ ກອງປະຊຸມໃຫຍ່ຄັ້ງ VIII ຂອງອົງຄະນະພັກແຂວງສາລະວັນ ແຕ່ປີ ຄ.ສ 2015-2020**

ກອງປະຊຸມໃຫຍ່ອົງຄະນະພັກແຂວງສາລະວັນ ຄັ້ງທີ VIII ໄດ້ດຳເນີນຂຶ້ນພາຍໃຕ້ບັນຍາກາດທີ່ອົບອຸ່ນນັບແຕ່ວັນທີ 8-10/07/2015 ທີ່ສະໂມສອນຂອງແຂວງ ມີຜູ້ແທນເຂົ້າຮ່ວມທັງຫມົດ 300 ສະຫາຍ, ຍິງ 26 ສະຫາຍ, ໃນນັ້ນ: ຜູ້ແທນສົມບູນ 269 ສະຫາຍ, ຍິງ 23 ສະຫາຍ, ເປັນຕົວແທນໃຫ້ແກ່ບັນດາສະຫາຍສະມາຊິກພັກທັງໝົດໃນທົ່ວແຂວງ 9.574 ສະຫາຍ .

ໂດຍແມ່ນສະຫາຍ ອາຊາງ ລາວລີ,ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ໄດ້ໃຫ້ກຽດເຂົ້າຮ່ວມໃນຄັ້ງນີ້, ກອງປະຊຸມໃຫຍ່ຄັ້ງນີ້ໄດ້ເລືອກຕັ້ງເອົາຄະນະບໍລິຫານງານ 33 ສະຫາຍ, ຍິງ 3 ສະຫາຍ, ເລືອກເອົາຄະນະປະຈຳ 11 ສະຫາຍ, 1 ສະຫາຍ ກອງປະຊຸມຄັ້ງປະຖົມມະລຶກໄດ້ເລືອກຕັ້ງ:

- ສະຫາຍ ສີສຸວັນ ວົງຈອມສີ ເປັນເລຂາພັກແຂວງ
- ສະຫາຍ ບຸນທຽມ ພິມມະສະຖິດ ເປັນຮອງເລຂາພັກແຂວງ
- ສະຫາຍ ບຸນທຽມ ແກ້ວໄຊຍະວົງ ເປັນຮອງເລຂາພັກແຂວງ
- ສະຫາຍ ບົວທອງ ຄູນຍອດປັນຍາ ເປັນຮອງເລຂາພັກແຂວງ
- ສະຫາຍ ຄໍາຈັນ ແຈ່ມສະຫມອນ ເປັນປະທານກວດກາພັກ

ຜ່ານການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ມາຮອດປະຈຸບັນ ກໍ່ເຫັນວ່າເຂົ້າສູ່ທ້າຍສະໄໝພໍດີໃນຊຸມປີຜ່ານມາ ຄະນະບໍລິຫານງານແຂວງ ສະໄໝທີ VIII ກໍ່ໄດ້ນໍາພາສ້າງສາພັດທະນາເສດຖະກິດໃຫ້ກ້າວໜ້າຢ່າງບໍ່ຢຸດຢັ້ງ.

**+ ບາງຄາດໝາຍສູ້ຊົນໄລຍະ ປີ 2015-2020**

- ຮັບປະກັນໃຫ້ທົ່ວແຂວງມີສະຖຽນລະພາບທາງດ້ານການເມືອງ-ມີຄວາມສະຫງົບເປັນລະບຽບຮຽບຮ້ອຍ ທາງດ້ານສັງຄົມທີ່ໜັກແໜ້ນ.
- ເຮັດໃຫ້ເສດຖະກິດຂະຫຍາຍຕົວຕໍ່ເນື່ອງເພີ່ມຂຶ້ນ 11% ຕໍ່ປີຂຶ້ນໄປ.
- ລາຍຮັບສະເລ່ຍຕໍ່ຄົນ ໃຫ້ບັນລຸ 1.950 ໂດລາສະຫະລັດ ໃນປີ 2020
- ໂຄງປະກອບດ້ານກະສິກໍາ ເພີ່ມຂຶ້ນ 3,8% ຕໍ່ປີ ອຸດສາຫະກໍາເພີ່ມຂຶ້ນ 15% ຕໍ່ປີ ແລະ ການບໍລິການເພີ່ມຂຶ້ນ13,5%.
- ການສົ່ງອອກໃຫ້ໄດ້ປະມານ 3-5% ຂອງ GDP.
- ເຮັດໃຫ້ໂຄງປະກອບເສດຖະກິດ ຕິດພັນກັບອຸດສາຫະກໍາປຸງແຕ່ງ ແລະ ການບໍລິການສອງສິ້ນ.
- ລາຍຮັບເຂົ້າງົບປະມານໃຫ້ໄດ້ 877 ຕື້ກີບຂຶ້ນໄປ ເພີ່ມຂຶ້ນສະເລ່ຍ 17% ຕໍ່ປີ.
- ຄຸ້ມຄອງລາຍຈ່າຍໃຫ້ຢູ່ໃນລະດັບ885 ຕື້ກີບ ແລະ ຫຼຸດຜ່ອນໜີ້ສິນຄຸມເຄືອ.
- ການຂາດດຸນງົບປະມານ ໃຫ້ນ້ອຍກວ່າ 9% ຂອງ GDP.
- ຂົນຂວາຍການລົງທຶນ ຈາກທຸກໆແຫຼ່ງທຶນ ໃຫ້ໄດ້ລະດັບ 7.560 ຕື້ກີບ ໃນນັ້ນ, ( ງົບປະມານລັດ 7,5% , ODA : 21% ເອກະຊົນພາຍໃນ+ ຕ່າງປະເທດ 55% ແລະ ທຶນເອກະຊົນ 5,6%.

**✧ ກອງປະຊຸມໃຫຍ່ຄັ້ງ IX ຂອງອົງຄະນະພັກແຂວງສາລະວັນ ແຕ່ປີ ຄ.ສ 2020-2025**

ກອງປະຊຸມໃຫຍ່ອົງຄະນະພັກແຂວງສາລະວັນ ຄັ້ງທີ IX ໄດ້ດໍາເນີນຂຶ້ນພາຍໃຕ້ບັນຍາກາດທີ່ອົບອຸ່ນນັບແຕ່ວັນທີ 23-24/11/2020 ທີ່ສະໂມສອນຂອງແຂວງ ມີຜູ້ແທນເຂົ້າຮ່ວມທັງຫມົດ ....... ສະຫາຍ, ຍິງ .....ສະຫາຍ, ໃນນັ້ນ: ຜູ້ແທນສົມບູນ ...... ສະຫາຍ, ຍິງ..... ສະຫາຍ, ເປັນຕົວແທນໃຫ້ແກ່ບັນດາສະຫາຍສະມາຊິກພັກທັງໝົດໃນທົ່ວແຂວງ ...... ສະຫາຍ .

ສະຫາຍ ປອ ໂພໄຊ ໄຊຍະສອນ

ສະຫາຍສີເຮັງ ທອມສົມບັດ

ສະຫາຍ ນາງ ບຸນທະວີ ດວງລາສີ

ໂດຍແມ່ນສະຫາຍ...................., ໄດ້ໃຫ້ ກຽດເຂົ້າຮ່ວມໃນຄັ້ງນີ້, ກອງປະຊຸມໃຫຍ່ຄັ້ງນີ້ໄດ້ເລືອກຕັ້ງເອົາຄະນະບໍລິຫານງານ ...... ສະຫາຍ, ຍິງ ..... ສະຫາຍ, ເລືອກເອົາຄະນະປະຈໍາ ..... ສະຫາຍ, ...... ສະຫາຍ ກອງປະຊຸມຄັ້ງປະຖົມມະລຶກໄດ້ເລືອກຕັ້ງ: ........................................................................

**+ ບາງຄາດໝາຍສູ້ຊົນໄລຍະ ປີ 2020-2025**

………………………………………………………………………………………………………

…………………………………………………………………………………………………………

**ສຳລັບບັນດາເມືອງ ລາຍລະອຽດມີດັ່ງນີ້:**

✧ **ເລຂາຄະນະບໍລິຫານງານພັກເມືອງ 8 ເມືອງ**

❶ **ເລຂາຄະນະພັກເມືອງສາລະວັນ ສະໄໝທີ I- IX:**

- ກອງປະຊຸມຄັ້ງທີ I ປີ 1975 ສະຫາຍ ສູນທອງ ທຳມະວົງ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ II ປີ 1979 ສະຫາຍ ບົວສີ ຄ່ຽມມະນີຂັນໄຊ ເປັນເລຂາພັກເມືອງ.
- ກອງປະຊຸມຄັ້ງທີ III ປີ 1986 ສະຫາຍ ບຸນຮຽງ ສິນລັດສະຫມີ ເປັນເລຂາພັກເມືອງ
- ກອງປະຊຸມ ຄັ້ງທີ IV ປີ 1993 ສະຫາຍ ສີພູມ ດວງບຸດດາ ເປັນເລຂາພັກເມືອງ
- ກອງປະຊຸມ ຄັ້ງທີ V ປີ 1999 ສະຫາຍ ສີພູມ ດວງບຸດດາ ເປັນເລຂາພັກເມືອງ
- ກອງປະຊຸມ ຄັ້ງທີ VI ປີ 2005 ສະຫາຍ ວັນນະສຸກ ຈຳປາຄຳ ເປັນເລຂາພັກເມືອງ
- ກອງປະຊຸມ ຄັ້ງທີ VII ປີ 2010 ສະຫາຍ ສີເຮັ່ງ ຫອມສິມບັດ ເປັນເລຂາພັກເມືອງ

  = ສະຫາຍ ຄຳເຫຼັກ ອິນດາວົງ ເປັນເລຂາພັກເມືອງ
- ກອງປະຊຸມ ຄັ້ງທີ VIII ປີ 2015 ສະຫາຍ ພູທິງ ຄຳມະນີວົງ ເປັນເລຂາພັກເມືອງ

  = ສະຫາຍ ທິງ ຈອມມະນີ ເປັນເລຂາພັກເມືອງ

**- ກອງປະຊຸມໃຫຍ່ຄັ້ງ** IX ໃນວັນທີ 6-7 ກຸມພາ ປີ 2020 ໄດ້ເລືອກເອົາ ສະຫາຍ ຈັນສີລອນ ສີສີມບູນ ກຳມະການພັກແຂວງ, ເປັນເລຂາພັກເມືອງ.

ສະຫາຍ ວັນນະລັກ ຫຼ້າຫຼູ່ຽມທະວີໄຊ ເປັນຮອງເລຂາພັກເມືອງ.

ສະຫາຍ ພິດສະໄໝ ເຂັມວິໄລ ເປັນຮອງເລຂາພັກເມືອງ, ພ້ອມທັງເປັນປະທານກວດກາພັກເມືອງ,

❷ **ເລຂາຄະນະພັກເມືອງເລົ່າງາມ ສະໄໝທີ I- XII**

- ກອງປະຊຸມຄັ້ງທີ I ປີ 1962 ສະຫາຍ ມຸນທາ ສີອັງຄະທັດ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ II ປີ 1965 ສະຫາຍ ອາໄພ ຄູນປາຫານ ເປັນເລຂາພັກເມືອງ.
- ກອງປະຊຸມຄັ້ງທີ III ປີ 1969 ສະຫາຍ ອາໄພ ຄູນປາຫານ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ IV ປີ 1973 ສະຫາຍ ຫວ່າງ ສີຫາຈັກ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ V ປີ 1982 ສະຫາຍ ມີໄຊ ລັດຕະນາ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VI ປີ 1986 ສະຫາຍ ທອງຫວັງ ສີຫາຈັກ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VII ປີ 1991 ສະຫາຍ ທິງ ຈອມມະນີ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VIII ປີ 1997 ສະຫາຍ ທິງ ຈອມມະນີ ເປັນເລຂາພັກເມືອງ.

  ປີ 1999 ສະຫາຍ ສີສຸວັນ ວົງຈອມສີ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ IX ປີ 2005 ສະຫາຍ ສີສູວັນ ວົງຈອມສີ ເປັນເລຂາພັກເມືອງ.

  ສະຫາຍ ຄຳເຫລັກ ອິນດາວົງ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ X ປີ 2010 ສະຫາຍ ນາງ ສູນທອນ ແກ້ວບົວລະພາ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ XI ປີ 2015 ສະຫາຍ ນາງ ສູນທອນ ແກ້ວບົວລະພາ ເປັນເລຂາພັກເມືອງ.

**- ກອງປະຊຸມໃຫຍ່ຄັ້ງ** XII ໃນວັນທີ 29 ມັງກອນ 2020 ໄດ້ເລືອກເອົາສະຫາຍ ສົມສັກ ທົງຄໍາຫານ ເປັນເລຂາພັກເມືອງ

ສະຫາຍ ພິດສະໄໝ ແກ້ວວົງສັກ ເປັນຮອງເລຂາພັກເມືອງ

ສະຫາຍ ດຣ ສັງວານ ແສງສາຍ ເປັນຮອງເລຂາພັກເມືອງ ພ້ອມທັງເປັນປະທານກວດກາ

**❸ ເລຂາຄະນະພັກເມືອງວາປີ ສະໄໝທີ I-** VIII

- ກອງປະຊຸມຄັ້ງທີ I ປີ 1983 ສະຫາຍ ກິແກ້ວ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ II ປີ 1986 ສະຫາຍ ໂພໄຊ ສຸດທະວົງ ເປັນເລຂາພັກເມືອງ.
- ກອງປະຊຸມຄັ້ງທີ III ປີ 1993 ສະຫາຍ ຄາໍຜົງ ລາດທະວົງ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ IV ປີ 1997 ສະຫາຍ ບຸນທຽມ ໄຊຍະວົງ ເປັນເລຂາພັກເມືອງ.
- ກອງປະຊຸມຄັ້ງທີ V ປີ 2005 ສະຫາຍ ບຸນທຽມ ໄຊຍະວົງ ເປັນເລຂາພັກເມືອງ.

= ສະຫາຍ ບຸນຍັງ ເທບຈັນທະວົງ ເປັນເລຂາພັກເມືອງ.

- ກອງປະຊຸມຄັ້ງທີ VI ປີ 2010 ສະຫາຍ ບຸນຍັງ ເທບຈັນທະວົງ ເປັນເລຂາພັກເມືອງ.
- ກອງປະຊຸມຄັ້ງທີ VII ປີ 2014 ສະຫາຍ ທ່ານ ລັງສີ ຈັນທະມາລີ ເປັນເລຂາພັກເມືອງ.

**- ກອງປະຊຸມໃຫຍ່ຄັ້ງ**VIII ໃນວັນ 28-29 ພະຈິກ 2019 ໄດ້ເລືອກເອົາສະຫາຍ ບຸນຍູ້ ຈັນທະລັງສີ ເປັນເລຂາພັກເມືອງ.

ສະຫາຍ ດົມວິໄລ ທອງສະຫວັນ ເປັນຮອງເລຂາ.

ສະຫາຍ ກິແກ້ວ ໄຊຍະລາດ ເປັນຮອງເລຂາ ທັງເປັນປະທານກວດກາ

**❹ ເລຂາຄະນະພັກເມືອງຄົງເຊໂດນ ສະໄໝທີ I-** VIII

- ກອງປະຊຸມຄັ້ງທີ I ປີ 1982 ສະຫາຍ ສູນທອງ ທໍາມະວົງ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ II ປີ 1986 ສະຫາຍ ຄໍາຕູ້ ແກ້ວສົມບັດ ເປັນເລຂາພັກເມືອງ.
- ກອງປະຊຸມຄັ້ງທີ III ປີ 1991 ສະຫາຍ ບຸນທຽມ ພົມມະສະຖິດ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ IV ປີ 1997 ສະຫາຍ ພູທອນ ເທບອາສາ ເປັນເລຂາພັກເມືອງ.
  - ປີ 1999 ສະຫາຍ ຂານຄໍາ ວົງໄຊ ເປັນເລຂາພັກເມືອງ.
  - ປີ 2003 ສະຫາຍ ຄໍາພູຍ ກິດຕິລາດລັງສີ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ V ປີ 2005-2010 ສະຫາຍ ບຸນມາ ແກ້ວບຸນມີ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VI ປີ 2010 ສະຫາຍ ບຸນມາ ແກ້ວບຸນມີ ເປັນເລຂາພັກເມືອງ.
  - ປີ 2014 ສະຫາຍ ຄາໍພຽງ ທໍາມະວົງ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VII ປີ 2015 ສະຫາຍ ບຸນປອນ ອາສາພິທັກ ເປັນເລຂາພັກເມືອງ.

**- ກອງປະຊຸມໃຫຍ່ຄັ້ງ** VIII ໃນວັນທີ 19-20 ກຸມພາ 2020 ໄດ້ເລືອກເອົາ:

ສະຫາຍ ແຫວນເພັດ ລັດດາວົງ ກໍາມະການພັກແຂວງ, ເປັນເລຂາພັກເມືອງ.

ສະຫາຍ ກ່ໍາ ແສງມະນີ ເປັນຮອງເລຂາພັກເມືອງ.

ສະຫາຍ ວັນນະລອນ ອິນທະພອນເດດ ເປັນຮອງເລຂາພັກ ທັງເປັນປະທານກວດກາພັກ,

**❺ ເລຂາຄະນະພັກເມືອງລະຄອນເພັງ ສະໄໝທີ I-** VIII

- ປີ 1970-1975 ສະຫາຍ ບົວສອນ ເປັນເລຂາພັກເມືອງ.
- ປີ 1976-1978 ສະຫາຍ ອາໄພ ຄູນປະທານ ເປັນເລຂາພັກເມືອງ.
- ປີ 1979-1983 ສະຫາຍ ທ່ານ ເກິ່ງ ໄຊຍະວົງ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ I ປີ 1983-1986 ສະຫາຍ ຂານຄາໍ ວົງໄຊ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ II ປີ 1986-1992 ສະຫາຍ ສີດາ ແກ້ວອຸ່ນຫລ້າ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ III ປີ 1992-1995 ສະຫາຍ ສຸກວັນ ສີຍາວົງ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ IV ປີ 1996- 2000 ສະຫາຍ ສົມຄິດ ຈິນມະນີວົງ ເປັນເລຂາພັກເມືອງ.

ປີ 2000 - 2005 ສະຫາຍ ພູມີ ແກ້ວພູແສງ ເປັນເລຂາພັກເມືອງ.

- ກອງປະຊຸມ ຄັ້ງທີ V ປີ 2005 ສະຫາຍ ລັງສີ ຈັນທະມາລີ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VI ປີ 2010 ສະຫາຍ ລັງສີ ຈັນທະມາລີ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VII ປີ 2015 ສະຫາຍ ວັນນະສຸກ ຈຳປາຄຳ ເປັນເລຂາພັກເມືອງ

= ສະຫາຍ ແກ້ວຜາ ສີລາດວງໃຈ ເປັນຮັກສາການເລຂາພັກເມືອງ.

**- ກອງປະຊຸມໃຫຍ່ຄັ້ງ** VIII ໃນວັນທີ 26 ທັນວາ 2019: ໄດ້ເລືອກເອົາສະຫາຍ ສົມໃຈ ອຸ່ນຈິດ ກຳມະການພັກແຂວງ, ເປັນເລຂາພັກເມືອງ

ສະຫາຍ ແກ້ວຜາ ສີລາດວງໃຈ ຮອງເລຂາພັກເມືອງ.

ສະຫາຍ ຫນູໃຊ ຈັນດາວົງ ເປັນຮອງເລຂາພັກເມືອງ, ພ້ອມທັງເປັນປະທານກວດກາພັກ

**❻ ເລຂາຄະນະພັກເມືອງຕະໂອ້ຍ ສະໄໝທີ I- XII**

- ກອງປະຊຸມຄັ້ງທີ I ປີ 1964 ສະຫາຍ ຄາໍຈັນ ໄຊຍະແສງລາວ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ II ປີ 1968 ສະຫາຍ ຄຳຈັນ ໄຊຍະແສງລາດ ເປັນເລຂາພັກເມືອງ.
- ກອງປະຊຸມຄັ້ງທີ III ປີ 1971 ສະຫາຍ ອາວີ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ IV ປີ 1977 ສະຫາຍ ບົວໃສ ວິລະຈິດ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ V ປີ 1983 ສະຫາຍ ຄຳຈັນ ໄຊຍະແສງລາດ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VI ປີ 1986 ສະຫາຍ ຄຳເກີດ ເວີນຄາໍ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VII ປີ 1993 ສະຫາຍ ດວງຈັນ ຍົມມະລາດ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VIII ປີ 2000 ສະຫາຍ ດວງຈັນ ຍົມມະລາດ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ IX ປີ 2005 ສະຫາຍ ບຸນມາ ສາລະສິນ ເປັນເລຂາພັກເມືອງ.

ສະຫາຍ ບຸນໂຮມ ໂກມສຸນີ ເປັນເລຂາພັກເມືອງ.

- ກອງປະຊຸມ ຄັ້ງທີ X ປີ 2010 ສະຫາຍ ບຸນໂຮມ ໂກມສຸນີ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ XI ປີ 2014 ສະຫາຍ ບຸນໂຮມ ໂກມສຸນີ ເປັນເລຂາພັກເມືອງ.

**- ກອງປະຊຸມໃຫຍ່ຄັ້ງ XII** ໃນວັນທີ 18-19 ສິງຫາ 2020 ໄດ້ເລືອກເອົາ:

- ສະຫາຍ ບຸນເນື້ອ ຫຼວງຄຳໄຕ ເປັນເລຂາພັກເມືອງ

- ສະຫາຍ ຄຳສະໄຫວ ວິລະກອນ ເປັນຮອງເລຂາພັກເມືອງ
- ສະຫາຍ ບຸນຍັງ ສິງຄຳດີ ເປັນຮອງເລຂາພັກເມືອງ ທັງເປັນປະທານກວດກາເມືອງ.

**❼ ເລຂາຄະນະພັກເມືອງຕຸ້ມລານ ສະໄໝທີ I-X**

- ກອງປະຊຸມຄັ້ງທີ I ປີ 1958 ສະຫາຍ ບຸນເກີດ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ II ປີ 1972 ສະຫາຍ ບຸນເກີດ ເປັນເລຂາພັກເມືອງ.
- ກອງປະຊຸມຄັ້ງທີ III ປີ 1980 ສະຫາຍ ບຸນຕີ ຫນໍ່ດ່ຽງ ເປັນເລຂາພັກເມືອງ.

ກອງປະຊຸມ ຄັ້ງທີ IV ປີ 1983 ສະຫາຍ ບຸນຕີ ຫນໍ່ດ່ຽງ ເປັນເລຂາພັກເມືອງ.

- ກອງປະຊຸມ ຄັ້ງທີ V ປີ 1986 ສະຫາຍ ຄຳບາງ ແສນຄຳບົວທອງ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VI ປີ 1990 ສະຫາຍ ຄຳບາງ ແສນດ ໍາບົວທອງ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VII ປີ 1997 ສະຫາຍ ບົວທອງ ຄຸນຍອດປັນຍາ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VIII ປີ 2005 ສະຫາຍ ບົວທອງ ຄຸນຍອດປັນຍາ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ IX ປີ 2011 ສະຫາຍ ສົມເລັດ ຈຸນລະມະນີ ເປັນເລຂາພັກເມືອງ.

ສະຫາຍ ບຸນທອນ ແກ້ວດວງໃຈ ເປັນເລຂາພັກເມືອງ.

- ກອງປະຊຸມ ຄັ້ງທີ X ປີ 2015 ສະຫາຍ ຈັນສະຫມອນ ພົມມະແສງ ເປັນເລຂາພັກເມືອງ.
- ກອງປະຊຸມໃຫຍ່ຄັ້ງ XI ໃນວັນທີ 10-11ຕຸລາ 2019 ໄດ້ເລືອກເອົາ: ສະຫາຍ ທອງໃສ ເພັດລາສີ ເປັນເລຂາພັກເມືອງ.

ສະຫາຍ ສົມຄິດ ກອງໄຊສະຫວັດ ເປັນຮອງເລຂາ.

ສະຫາຍ ບົວແກ້ວ ວົງຄຳຈັນ ເປັນຮອງເລຂາ ພ້ອມທັງເປັນປະທານກວດກາ

**❽ ເລຂາຄະນະພັກເມືອງສະໝ້ວຍ ສະໄໝທີ I- VIII**

- ກອງປະຊຸມຄັ້ງທີ I ປີ 1980 ສະຫາຍ ບຸນລ້າ ມຽງມະນີ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ II ປີ 1984 ສະຫາຍ ຄຳເພັຍ ລາເດີ ເປັນເລຂາພັກເມືອງ.
- ກອງປະຊຸມຄັ້ງທີ III ປີ 1993 ສະຫາຍ ເກດແກ້ວ ສາຍຕຳບອຍ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ IV ປີ 1996 ສະຫາຍ ເກດແກ້ວ ສາຍຕາບອຍ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ V ປີ 2004 ສະຫາຍ ວຽນຈຽນ ກຸມມານພົນເບ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VI ປີ 2009 ສະຫາຍ ວຽນຈຽນ ກຸມມານພົນເບ ເປັນເລຂາພັກເມືອງ.
- ກອງປະຊຸມ ຄັ້ງທີ VII ປີ 2015 ສະຫາຍ ຄຳຕາ ໂຮຊົ່ງເຮືອງ ເປັນເລຂາພັກເມືອງ.

ກອງປະຊຸມ ໃຫຍ່ຄັ້ງ VIII ໃນວັນທີ 13 ສິງຫາ 2019 ໄດ້ເລືອກເອົາ:

- ສະຫາຍ ບຸນເຕີຍ ດວງສຸລິຍະວົງສາ ເປັນເລຂາພັກເມືອງ
- ສະຫາຍ ວິໄລສັກ ພົມພັກດີ ເປັນຮອງເລຂາພັກເມືອງ
- ສະຫາຍ ບຸນນານ ປັນຍາຈັກ ເປັນຮອງເລຂາພັກແຂວງ ທັງເປັນປະທານກວດກາເມືອງ.

**ອີງຄະນະພັດແຂວງສາລະວັນພວກເຮົາ ໄດ້ພັດທະນາສ້າງໃນຫຼາຍດ້ານເປັນຕົ້ນແມ່ນຄວາມທຸກຍາກໄດ້ຮັບການແກ້ໄຂປະຈຸບັນຍັງມີເມືອງທຸກຍາກ 2 ເມືອງ, ບ້ານທຸກຍາກ 40 ບ້ານ ແລະ ຄອບຄົວທຸກຍາກ 1.500 ກວ່າຄອບຄົວ ເທົ່ານັ້ນ ຄາດວ່າຄອບຄົວທຸກຍາກ ເລົ່ານີ້ຈະຮັບການແກ້ໄຂໃນໄວໆນີ້.**

ພວກເຮົາ ຕ້ອງສືບຕໍ່ເອົາໃຈໃສ່ຮັບປະກັນຄວາມມີສະຖຽນລະພາບ ທາງດ້ານການເມືອງ ແລະ ຄວາມສະຫງົບຮຽບຮ້ອຍຂອງສັງຄົມຢ່າງໜັກແໜ້ນ.

ພຶດຕິກຳ 65 ປີ ແຫ່ງການນຳພາຂອງພັກ ໄດ້ຢັ້ງຢືນຢ່າງຈະແຈ້ງວ່າ ຄວາມສາມັກຄີເປັນເອກະພາບພາຍໃນພັກ,ແມ່ນມູນເຊື້ອອັນດີງາມ ແລະ ເປັນບົດຮຽນອັນປະເສີດຂອງພັກເຮົາ, ເປັນປັດໄຈສຳຄັນຄ້ຳປະກັນການຢືນຍົງຄົງຕົວ ແລະ ການຂະຫຍາຍຕົວຂອງພັກ, ຮັບປະກັນໄຊຊະນະຂອງການປະຕິວັດຢູ່ພາຍໃນແຂວງ.

ບໍ່ວ່າຍາມໃດ, ພັກກໍ່ເອົາໃຈໃສ່ຕໍ່ບັນຫາການປັບປຸງ, ເພີ່ມວີຄວາມສາມັກຄີປອງດອງໃນວົງຄະນາຍາດແຫ່ງຊາດ ບົນພື້ນຖານພັນທະພາບກຳມະກອນ, ຊາວກະສິກອນ ແລະ ນັກຮຽນຮູ້ປັນຍາຊົນພາຍໃຕ້ການນຳພາຂອງພັກ, ຄວາມສາມັກຄີປອງດອງຊາດເປັນມູນເຊື້ອອັນປະເສີດຂອງຊາດລາວເຮົາ, ເປັນທາດແທ້ອັນດີງາມທີ່ມີມາແຕ່ໃດ ຂອງປະຊາຊົນເຜົ່າຕ່າງໆ.

ໃນຕໍ່ໜ້າ ແລະ ຍາວນານ, ພວກເຮົາຕ້ອງປະຕິບັດແຜນນະໂຍບາຍຫັນລົງຮາກຖານ ຕິດພັນກັບການພັດທະນາຊົນນະບົດຢ່າງຮອບດ້ານ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນເຜົ່າຕ່າງໆ ເປັນຕົ້ນໃນເຂດຊົນນະບົດພູດອຍຫ່າງໄກສອກຫຼີກໃຫ້ເປັນປົກກະຕິ ແລະ ດີຂຶ້ນຢ່າງບໍ່ຢຸດຢັ້ງ, ສູ້ຊົນເຮັດໃຫ້ລະດັບການຂະຫຍາຍຕົວຂອງເຜົ່າຕ່າງໆກ້າວຂຶ້ນທຽມກັນເປັນກ້າວໆ, ເຮັດໃຫ້ມີຄວາມປອງດອງ ແລະ ສາມັກຄີເອື້ອເຟືອຊ່ວຍເຫຼືອກັນ, ປະຕິບັດນະໂຍບາຍສະເໝີພາບ ລະຫວ່າງເຜົ່າຕ່າງໆ ໃຫ້ປະກົດຜົນເປັນຈິງຢ່າງມີຊີວິດຊີວາ.

ດ້ວຍນະໂຍບາຍສາມັກຄີທົ່ວປວງຊົນ ແລະ ດ້ວຍນະໂຍບາຍອັນຖືກຕ້ອງຂອງພັກ ກ່ຽວກັບສາສະໜາ, ບັນດານັກບວດ ແລະ ສາສະນິກະຊົນຈຳນວນຫຼວງຫຼາຍ ເຂົ້າຮ່ວມໃນພາລະກິດປົດປ່ອຍຊາດ ກໍ່ຄືໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນໄລຍະໃໝ່ດ້ວຍຄວາມຕື່ນຕົວເປັນເຈົ້າການ ພັກເຮົາຈະສືບຕໍ່ຍຶດໝັ້ນໃນນະໂຍບາຍດັ່ງກ່າວ ເພື່ອຮັບປະກັນສິດເສລີພາບໃນການເຊື່ອຖື ຫຼືບໍ່ເຊື່ອຖື, ຮັບປະກັນໃຫ້ພົນລະເມືອງທຸກຄົນມີຄວາມສະເໝີພາບ ແລະ ເຄື່ອນໄຫວຖືກຕ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ, ປະກອບສ່ວນເຂົ້າໃນການເພີ່ມທະວີຄວາມສາມັກຄີປອງດອງລະຫວ່າງເຜົ່າຊົນ ແລະ ຊັ້ນຄົນຕ່າງໆກໍ່ຄືໃນພາລະກິດລວມຂອງຊາດ, ພາຍໃນແຂວງສາລະວັນ.

ໃນທຸກໄລຍະຂອງການປະຕິວັດ, ພັກເຮົາໄດ້ຮູ້ສົມທົບແໜ້ນລະຫວ່າງລັດທິຮັກຊາດ ທີ່ແທ້ຈິງກັບລັດທິສາກົນກຳມະຊີບອັນຜ່ອງໃສ, ເດັດດ່ຽວຕໍ່ສູ້ກັບທຸກປະກົດການທີ່ເຫັນແກ່ຕົວ, ແນວຄິດຄັບແຄບ, ຮູ້ສົມທົບຢ່າງກົມກຽວລະຫວ່າງກຳລັງແຮງຂອງຊາດກັບກຳລັງແຮງ ຂອງຍຸກສະໄໝ.

ຕໍ່ໜ້າການຜັນແປຂອງສະພາບການໂລກ ແລະ ພາກພື້ນທີ່ມີທັງຂໍ້ສະດວກ ແລະ ກາລະໂອກາດອັນອຳນວຍ ແລະ ມີທັງສິ່ງທ້າທາຍທົດສອບ ດັ່ງໃນປະຈຸບັນ; ພັກເຮົາຈະສືບຕໍ່ສ້າງສາຍພົວພັນມິດຕະພາບ ແລະ ເປີດກວ້າງການຮ່ວມມືສາກົນຢ່າງບໍ່ຢຸດຢັ້ງ, ປະຕິບັດນະໂຍບາຍການຕ່າງປະເທດ, ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ, ສ້າງການພົວພັນຮ່ວມມືແບບສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ ກັບທຸກໆປະເທດ ໂດຍບໍ່ຈຳແນກລະບອບການເມືອງສັງຄົມຕ່າງກັນບົນພື້ນຖານ 5 ຫຼັກການຢູ່ຮ່ວມກັນໂດຍສັນຕິ.

ພວກເຮົາໄດ້ເພີ່ມທະວີສາຍພົວພັນມິດຕະພາບ , ຄວາມສາມັກຄີພິເສດແລະການຮ່ວມມືຮອບດ້ານກັບ ສສຫວຽດນາມ ພ້ອມກັບເພື່ອນມິດຍຸດທະສາດອື່ນໆຢ່າງບໍ່ຢຸດຢັ້ງ ແລະ ເຮັດໃຫ້ເກີດດອກອອກຜົນຍິ່ງໆຂຶ້ນ ເສີມສ້າງສາຍພົວພັນທີ່ດີ ແລະ ມີຄວາມເຂົ້າອົກເຂົ້າໃຈກັນກັບບັນດາປະເທດໃກ້ຄຽງ ແລະ ໃນສະມາຄົມອາຊຽນ

ຂະຫຍາຍການພົວພັນຮ່ວມມື ກັບເພື່ອນມິດສາກົນໃນທົ່ວໂລກ, ປະກອບສ່ວນໃນພາລະກິດສັນຕິພາບ ເອກະລາດແຫ່ງຊາດ ສະຖຽນລະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ໃນໂລກ.

ຜ່ານວິວັດທະນາການ 65 ປີ ແຫ່ງການນຳພາຂອງຕົນ, ພັກເຮົາຍິ່ງເຫັນແຈ້ງວ່າ: **<u>ການສະໜິດຕິດພັນ ກັບມະຫາຊົນ,</u>** ຮ່ວມທຸກຮ່ວມສຸກກັບປະຊາຊົນ, ຮັບຟັງຄວາມຄິດຄວາມເຫັນຂອງມະຫາຊົນ, ເຊື່ອໝັ້ນມະຫາຊົນ, ຖືປະຊາຊົນເປັນກົກນັ້ນແມ່ນບໍ່ເກີດ ແມ່ນເຫງົ້າພະລັງແຮງທີ່ບໍ່ບົກແຫ້ງຂອງພັກ, ພັກເຮົາຍາມໃດກໍ່ຈົ່ງຮັກພັກດີຢ່າງສຸດຊຶ້ງ ຕໍ່ຜົນປະໂຫຍດອັນພື້ນຖານຂອງປະຊາຊົນຊາວຜູ້ອອກແຮງງານ ແລະ ຂອງຊາດຕົນ ພັກບໍ່ມີອຸດົມຄະຕິອື່ນໃດ ນອກຈາກເຮັດທຸກສິ່ງຢ່າງເພື່ອຄວາມເປັນເອກະລາດ ແລະ ຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດ ເພື່ອອິດສະຫຼະ ພາບ, ຄວາມຢູ່ເຢັນເປັນສຸກ ແລະ ຄວາມຮັ່ງມີຂອງປະຊາຊົນບັນດາເຜົ່າ ຈະແມ່ນການກຳນົດແນວທາງນະໂຍບາຍ, ການຕົກລົງບັນຫາ, ການຈັດຕັ້ງປະຕິບັດແນວທາງນະໂຍບາຍພັກເຮົາ ກໍ່ລ້ວນແຕ່ໄດ້ເລີ່ມຈາກຄວາມມຸ້ງມາດປາດຖະໜາຂອງປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ. ສະນັ້ນ; ພາລະກິດຂອງພັກ, ພາລະກິດປະຕິວັດຈຶ່ງແມ່ນພາລະກິດຂອງມະຫາຊົນ, ຂອງທົ່ວປວງຊົນທັງຊາດ.

ນັ້ນແມ່ນບົດຮຽນອັນປະເສີດ ແລະ ເປັນມູນເຊື້ອອັນດີງາມທີ່ສຸດຂອງພັກເຮົາ ເຊິ່ງໃນເງື່ອນໄຂພັກກຳອຳນາດຄືດັ່ງປະຈຸບັນນີ້, ພວກເຮົາຍິ່ງຕ້ອງອອກແຮງເສີມຂະຫຍາຍມູນເຊື້ອດັ່ງກ່າວ.

ສະນັ້ນ, ບໍ່ວ່າຢູ່ບ່ອນໃດ, ບໍ່ວ່າຍາມໃດການຈັດຕັ້ງພັກ, ພະນັກງານ ແລະ ສາມະຊິກພັກຕ້ອງໃກ້ຊິດສະໜິດຕິດພັນແໜ້ນກັບມະຫາຊົນ, ມີຄວາມຫວ່ງໄຍ ແລະ ນຳເອົາຜົນປະໂຫຍດມາໃຫ້ປະຊາຊົນ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າຫຼຸດພົ້ນຈາກຄວາມທຸກຍາກຫຼ້າຫຼັງ ແລະໄດ້ຮັບການປັບປຸງ ດີຂຶ້ນເລື້ອຍໆ.

ສະມາຊິກພັກ, ຄະນະພັກແຕ່ລະຄົນ ຕ້ອງຮັບຮູ້ເລິກເຊິ່ງຕື່ມອີກ ກ່ຽວກັບຄວາມໝາຍສຳຄັນຂອງບັນຫານີ້ ແລະ ວິທີການອັນຕັ້ງໜ້າ, ເພື່ອປັບປຸງຮັດແໜ້ນສາຍພົວພັນແບບກາຍອິນຊີລະຫວ່າງພັກກັບມະຫາຊົນ, ຕ້ອງເອົາໃຈໃສ່ເຊີດຊູຄວາມເປັນແບບຢ່າງນຳໜ້າໃນການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ເດັດດ່ຽວກຳຈັດປັດເປົ່າພະຍາດອາດຍາສິດ, ຫ່າງເຫີນຈາກມະຫາຊົນ, ເອົາໃຈໃສ່ປັບປຸງລະບອບລະບຽບຢ່າງຕັ້ງໜ້າຕື່ມອີກ ເພື່ອສ້າງເງື່ອນໄຂໃຫ້ມະຫາຊົນ ໄດ້ເຂົ້າຮ່ວມໃນການກໍ່ສ້າງພັກນັບມື້ນັບກວ້າງຂວາງ ແລະ ເລິກເຊິ່ງກວ່າເກົ່າ ເປັນຕົ້ນແມ່ນການຮັບປະກັນໃຫ້ປະຊາຊົນ ໄດ້ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງພັກ, ຂອງພະນັກງານ ແລະ ສະມາຊິກພັກ, ສາມາດສະເໜີຄວາມຄິດຄວາມເຫັນຕຳນິສິ່ງຂ່າວ, ຊ່ວຍເຫຼືອກໍ່ສ້າງ ແລະ ປັບປຸງພັກໃນຮາກຖານຕ່າງໆ.

ຕະຫຼອດ 65 ປີ ແຫ່ງການຕໍ່ສູ້ມີໄຊ ເຊິ່ງພັກເຮົາສາມາດສ້າງເປັນກຳລັງການເມືອງອັນໜຶ່ງອັນດຽວ ນຳພາຂະບວນການປະຕິວັດຂອງປະຊາຊົນລາວນັ້ນ, ສາເຫດສຳຄັນແມ່ນຍ້ອນ **<u>ພັກເຮົາ ຍາມໃດກໍ່ເອົາໃຈໃສ່ປັບປຸງຕົນເອງດ້ວຍການສ້າງພັກ ຕິດພັນກັບໜ້າທີ່ການເມືອງຂອງພັກ,</u>** ກໍ່ສ້າງຄົນໃຫ້ມີຄວາມສາມາດສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງພາລະກິດການປະຕິວັດ ໃນແຕ່ລະໄລຍະຢູ່ສະເໝີ.

ໃນສະພາບທີ່ປະເທດຂອງພວກເຮົາພວມຢູ່ໃນໄລຍະແຫ່ງການຂະຫຍາຍຕົວ ທີ່ລັກສະນະຕັດສິນສຳລັບການສ້າງຖ່ວງທ່າໃໝ່ເພື່ອກ້າວຂຶ້ນນັ້ນ, ມີຄວາມຈຳເປັນທີ່ສຸດຕ້ອງປັບປຸງປົວແປງພັກໃຫ້ໜັກແໜ້ນເຂັ້ມແຂງໃນທຸກດ້ານ, ໂດຍສະເພາະແມ່ນຕ້ອງໄດ້ຕັ້ງໜ້າປັບປຸງຕົ້ນເອງໃຫ້ມີຄວາມເຂັ້ມແຂງທາງ**<u>ດ້ານການເມືອງ - ແນວຄິດ</u>** ຮັບປະກັນຄວາມເປັນເອກະພາບສູງທາງດ້ານທັດສະນະຫຼັກໝັ້ນ ໂດຍການເຊື່ອມຊຶມກຳແໜ້ນຈຸດໝາຍ, ທິດທາງວຽກງານ ແລະ ວິທີການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກໃນແຕ່ລະໄລຍະ, ເດັດດ່ຽວຢຶດໝັ້ນໃນລັດທິມາກ-ເລນິນ ແລະ ອຸດົມການຂອງພັກ, ຕັ້ງໜ້າຕໍ່ສູ້ຕ້ານ, ຕອບແກ້ກັບບັນດາກະແສແນວຄິດທີ່ປໍລະປັກ ແລະ ຜິດເຂວ, ກໍ່ຄືຜົນສະທ້ອນຕ່າງໆນາໆຂອງລັດທິສວຍໂອກາດໃນທຸກຮູບແບບ ຢ່າງເດັດຂາດ ແລະ ທັນການ.

ຕ້ອງມີຄວາມສະດຸ້ງໄວ້ໃນການຊອກເຫັນບັນຫາ, ເກັບກຳແນວຄິດຈິດໃຈຂອງສັງຄົມພ້ອມທັງມີວິທີການເພື່ອແກ້ໄຂສະພາບ ແລະ ນຳພາແນວຄິດທີ່ເກີດຂຶ້ນໃນພຶດຕິກຳການນຳພາຂອງພັກ ໃຫ້ສອດຄ່ອງ ແລະ ທັນການ, ມີຄວາມຕັ້ງໜ້າເປັນເຈົ້າການໃນການຕອບຕ້ານການໂຄສະນາໃສ່ຮ້າຍປ້າຍສີ ກໍ່ຄືການທັບຖົມໂຈມ ຕີບິດເບືອນຄວາມເປັນຈິງຕ່າງໆ ຂອງພວກບໍ່ຫວັງດີ, ຕີຖອຍກົນອຸບາຍ " **ການຫັນປ່ຽນໂດຍສັນຕິ** ",ເດັດຂາດແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ເພື່ອບໍ່ມີຊ່ອງຫວ່າງແກ່ການປຸກປັ່ນແນວຄິດ, ລົ່ງເລຄອນແຄນຕໍ່ບົດບາດອິດທິພົນຂອງພັກ ແລະ ຄວາມຈີບງາມຂອງລະບອບໃໝ່.

ກຳລັງແຮງທາງດ້ານການເມືອງ ແລະ ແນວຄິດຂອງພັກ ຕ້ອງຮັບປະກັນດ້ວຍກຳລັງແຮງທາງ**<u>ດ້ານການຈັດຕັ້ງ</u>**, ເຊິ່ງກ່ອນອື່ນໝົດຕ້ອງຮັບປະກັນໃຫ້ຫຼັກການລວມສູນປະຊາທິປະໄຕ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ເຂັ້ມງວດ, ເຮັດໃຫ້ພັກເຮົາກາຍເປັນກ້ອນກຳລັງເອກະພາບທາງດ້ານແນວຄິດ, ມານະຈິດ ແລະ ການກະທຳ. ໃນຕໍ່ໜ້ານີ້, ພວກເຮົາຕ້ອງເສີມຂະຫຍາຍປະຊາທິປະໄຕພາຍໃນພັກ ແລະ ໃນທົ່ວສັງຄົມ ຕິດພັນກັບການເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມເຂັ້ມງວດກວດຂັນທາງດ້ານລະບຽບວິໄນ, ຕ້ອງສືບຕໍ່ສ້າງ ແລະ ປັບປຸງກົນໄກສົ່ງເສີມປະຊາທິປະໄຕ ໄປຄຽງຄູ່ກັບການຮັບປະກັນການນຳພາລວມສູນ, ເປັນເອກະພາບ. ຕໍ່ສູ້ຢ່າງເດັດດ່ຽວ ແລະ ເປັນເຈົ້າການຕ້ານກັບປະກົດການອາດຍາສິດ, ລ່ວງລະເມີດສິດປະຊາທິປະໄຕ, ລັດທິເອກະຊົນຄັບແຄບ, ພາກສ່ວນ, ບໍ່ເຄົາລົບລະບຽບວິໄນ, ນະໂຍບາຍເອົາໃຈກັນແບບມະລຸ້ມມະລ້ອຍຢ່າງແຂງແຮງກວ່າເກົ່າ. ພ້ອມກັນນັ້ນກໍ່ຕ້ອງປະຕິບັດຫຼັກການຕຳນິຕົນເອງ ແລະ  ຕຳນິຕິຊົມຊ່ວຍເຫຼືອກໍ່ສ້າງກັນ ໃນການດຳເນີນຊີວິດພັກຢ່າງເຂັ້ມງວດ ແລະ ເປັນປະຈຳ, ສືບຕໍ່ປັບປຸງບູລະນະລະບົບກົງຈັກການຈັດຕັ້ງ ແລະ  ອົງຄະນະພັກຂັ້ນແຂວງ, ເມືອງ, ຄະນະພັກຮາກຖານພັກ ແລະ ສະມາຊິກພັກໃຫ້ເຂັ້ມແຂງ, ມີຄຸນນະພາບ ເພື່ອເຮັດຫຼ້ອນພາລະບົດບາດນຳພາຂອງຕົນເປັນຢ່າງດີ.

ພ້ອມກັນນີ້, ພວກເຮົາຕ້ອງສືບຕໍ່ປັບປຸງ**<u>ແບບແຜນເຄື່ອນໄຫວນຳພາ ແລະ ຍົກລະດັບຄວາມສາມາດກຳອຳນາດ</u>**ຂອງຕົນໃຫ້ສູງຂຶ້ນຕື່ມອີກ.

ພວກເຮົາສືບຕໍ່ຍຶດໝັ້ນແນວຄິດຊີ້ນຳ-ນຳພາການເມືອງ-ແນວຄິດ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ ສະເໜີພະນັກງານຫຼັກແຫຼ່ງໃຫ້ອົງການຈັດຕັ້ງຕ່າງໆຂອງລັດ, ອົງການມະຫາຊົນ ໂຄສະນາສຶກສາອົບຮົມຊວນເຊື່ອ ແລະ ເສີມຂະຫຍາຍບົດບາດຂອງການຈັດຕັ້ງ ແລະ ສະມາຊິກພັກ. ສືບຕໍ່ປັບປຸງແບບແຜນການພົວພັນຕາມທິດຫັນເຂົ້າສູ່ລະບົບລະບຽບການ.

ສືບຕໍ່ປັບປຸງແບບແຜນນຳພາເປັນໝູ່ຄະນະ ແລະ ບຸກຄົນຮັບຜິດຊອບ ຕາມທິດຮັບປະກັນເສີມຂະຫຍາຍປະຊາທິປະໄຕ, ສະຕິປັນຍາຂອງໝູ່ຄະນະ, ການເຊີດຊູຍົກສູງຄວາມຮັບຜິດຊອບ, ມີຫົວຄິດປະດິດສ້າງ, ກ້າເຮັດກ້າຮັບຜິດຊອບຂອງບຸກຄົນ.  ດັ່ງນັ້ນ, ຕ້ອງເຮັດແນວໃດໃຫ້ອົງການອຳນາດລັດມີຄວາມສັກສິດທັງຮັບປະກັນຄວາມປອດໃສຍຸຕິທຳ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ.

ພວກເຮົາຕ້ອງສືບຕໍ່ປັບປຸງບູລະນະລະບົບອຳນາດແຫ່ງລັດໃຫ້ເລິກເຊິ່ງ, ໜັກແໜ້ນຕື່ມອີກ, ເສີມຂະຫຍາຍບົດບາດຂອງແຕ່ລະອົງການໃຫ້ສົມຄູ່ກັບໜ້າທີ່ການເມືອງ ຕາມຫຼັກການລວມສູນເປັນເອກະພາບ ພາຍໃຕ້ການນຳພາຂອງພັກ; ຕັ້ງໜ້າຄົ້ນຄວ້າປະຕິບັດກົນໄກ ແລະ ລະບຽບການອັນຈຳເປັນ ກ່ຽວກັບການຄຸ້ມຄອງບໍລິຫານ ເພື່ອຫຼຸດຜ່ອນຊ່ອງຫວ່າງ  ແລະ ຈຳກັດປັດເປົ່າປະກົດການອາດຍາສິດ, ການສໍ້ລາດບັງຫຼວງ ແລະປະກົດການຫຍໍ້ທໍ້ອື່ນໆ, ເຮັດໃຫ້ອຳນາດລັດຂອງພວກເຮົາມີຄວາມໂປ່ງໃສ, ຄຸ້ມຄອງບໍລິຫານສັງຄົມຢ່າງມີປະສິດທິຜົນ, ມີຄວາມສັກສິດ, ສ້າງໃຫ້ລັດເຮົາກາຍເປັນລັດຂອງປະຊາຊົນ, ໂດຍປະຊາຊົນ  ແລະ ເພື່ອປະຊາຊົນຢ່າງແທ້ຈິງ.

ບົດຮຽນອັນປະເສີດທີ່ສຸດຂອງພັກເຮົາອີກປະການໜຶ່ງກໍ່ແມ່ນ, ໃນແຕ່ລະໄລຍະຂອງພາລະ ກິດປະຕິວັດນັ້ນ , ພັກເຮົາລ້ວນແຕ່ສາມາດສ້າງໃຫ້ມີຖັນແຖວພະນັກງານກ້າແກ່ນ, ມີຄວາມຈົ່ງຮັກພັກດີຕໍ່ພາລະກິດຂອງພັກ. ມາໃນເງື່ອນໄຂປະຈຸບັນ, ພັກຕໍ່ສືບຕໍ່**ເອົາໃສ່ຢ່າງຈິດຈໍ່ທີ່ສຸດ ຕໍ່ບັນຫາການກໍ່ສ້າງພະນັກງານ**, ເປັນຕົ້ນແມ່ນພະນັກງານນຳພາ-ຄຸ້ມຄອງທີ່ມີຄວາມກະຕືລືລົ້ນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານມີຜົນສຳເລັດ. ສຸມໃສ່ສ້າງຖັນແຖວພະນັກງານນຳພາ, ພະນັກງານຫຼັກແຫຼ່ງໃຫ້ຂັ້ນເມືອງ ແລະ ຢູ່ຮາກຖານ.

ພວກເຮົາຕ້ອງສືບຕໍ່ຄົ້ນຄວ້າ ແລະ ປະຕິບັດກົນໄກອັນແທດເໝາະ ແລະ ລະອຽດກວ່າເກົ່າໃນການປະຕິບັດແຜນນະໂຍບາຍສ້າງພະນັກງານ ຜ່ານຂະບວນການວຽກງານຕົວຈິງ, ເຮັດໃຫ້ພະນັກງານເຊື່ອມຊຶມແລະ ກຳແໜ້ນແນວທາງ, ນະໂຍບາຍຂອງພັກ, ມີຄວາມສາມາດຫັນແນວທາງນະໂຍບາຍ, ເປັນຂໍ້ກຳນົດເປັນລະບຽບການ, ເປັນແຜນການ ແລະ ຮູ້ຈັກນຳພາການຈັດຕັ້ງປະຕິບັດໃຫ້ເກີດໝາກເກີດຜົນ.

ພ້ອມກັນນີ້, ກໍ່ເອົາໃຈໃສ່ປັບປຸງວຽກງານການຈັດວາງນຳໃຊ້ ແລະ ການປະຕິບັດນະໂຍບາຍຕໍ່ພະນັກງານ, ສືບຕໍ່ຍຶດໝັ້ນ ແລະ ປັບປຸງທັດສະນະ ແລະ ວິທີການຕີລາຄາພະນັກງານໃຫ້ຖືກຕາມທິດເສີມຂະຫຍາຍປະຊາທິປະໄຕ, ວິທະຍາສາດ ແລະ ພາວະວິໄສ, ເອົາຜົນສຳເລັດຂອງໜ້າທີ່ວຽກງານເປັນໄມ້ຫຼາວັດແທກໃນການຕີລາຄາພະນັກງານ; ຈັດວາງພະນັກງານໃສ່ວຽກໃຫ້ຖືກກັບວິຊາສະເພາະ ແລະ ລະດັບຄວາມສາມາດຂອງເຂົາເຈົ້າ, ນຳໃຊ້ໃຫ້ໝົດຄຸນປະໂຫຍດ ຂອງຖັນແຖວພະນັກງານປະເພດຕ່າງໆ ໂດຍມີກົນໄກສົ່ງເສີມໃຫ້ ເຂົາເຈົ້າໄດ້ປະກອບສ່ວນຄວາມຮູ້ຄວາມສາມາດ ຂອງຕົນເຂົ້າໃນພາລະກິດລວມຂອງຊາດດີກວ່າເກົ່າ. ພວກເຮົາຕ້ອງເອົາໃຈໃສ່ຊອກຮູ້ເກັບກຳ ແລະ ນຳໃຊ້ຜູ້ທີ່ມີຄວາມສາມາດ, ມີພອນສະຫວັນ ທັງຢູ່ພາຍໃນ ແລະ ນອກການຈັດຕັ້ງຂອງພັກ, ພິເສດຕ້ອງໃຫ້ຄວາມສຳຄັນຫຼາຍຕື່ມອີກຕໍ່ການກໍ່ສ້າງ ແລະ ນຳໃຊ້ພະນັກງານຊົນເຜົ່າ ແລະ ພະນັກງານເພດຍິງ; ເອົາໃຈໃສ່ຕໍ່ການນຳໃຊ້ ແລະ ກໍ່ສ້າງພະນັກງານໜຸ່ມນ້ອຍ ແນໃສ່ຮັບປະກັນລັກສະນະສືບທອດ, ຕໍ່ເນື່ອງໃນຖັນແຖວພະນັກງານ.

ຕັ້ງໜ້າຄົ້ນຄວ້າປັບປຸງ ແລະ ສືບຕໍ່ປະຕິບັດນະໂຍບາຍໃຫ້ແກ່ພະນັກງານຢ່າງເໝາະສົມແນໃສ່ຊຸກຍູ້ສົ່ງເສີມໃຫ້ຖັນແຖວພະນັກງານ ມີຄວາມບຸກໜ້າບືນຕົວໃນການປະຕິບັດໜ້າທີ່ວຽກງານ ແລະ ຝຶກຝົນຫຼໍ່ຫຼອມຕົນເອງ, ຍົກສູງຄວາມຮູ້ຄວາມສາມາດຂອງຕົນຂຶ້ນຢ່າງບໍ່ຢຸດຢັ້ງ ເພື່ອຮັບຜິດຊອບພາລະໜ້າທີ່ອັນໜັກໜ່ວງກວ່າເກົ່າ.

ຜົນງານ ແລະ ໄຊຊະນະທີ່ພວກເຮົາບັນລຸໄດ້ໃນຊຸມປີຜ່ານມາແມ່ນໃຫຍ່ຫຼວງ ແລະ ມີຄວາມໝາຍປະຫວັດສາດ, ມັນຕິດພັນໂດຍກົງກັບການນຳພາ ອັນປີຊາສາມາດຂອງພັກເຮົາ. ປະຊາຊົນເຮົາມີຄວາມເອກອ້າງທະນົງໃຈເປັນຢ່າງຍິ່ງທີ່ໄດ້ມີພັກນຳພາ, ເຊິ່ງຍາມໃດກໍ່ຈົ່ງຮັກພັກດີຢ່າງສຸດຊຶ້ງ ຕໍ່ຜົນປະໂຫຍດຂອງຊາດ, ຂອງຊາວຜູ້ອອກແຮງງານລາວບັນດາເຜົ່າ; ຍາມໃດກໍ່ສະໜິດຕິດພັນ, ຮ່ວມສຸກຮ່ວມທຸກ, ຮ່ວມເປັນຮ່ວມຕາຍກັບປະຊາຊົນ, ຮັບໃຊ້ປະຊາຊົນ ແລະປະເທດຊາດຢ່າງສຸດອົກສຸດໃຈ.

ນັ້ນແມ່ນ, ທາດແທ້ມູນເຊື້ອອັນດີງາມຂອງພັກທີ່ໄດ້ສະແດງອອກຢ່າງມີຊີວິດຊີວາທີ່ສຸດຕະຫຼອດ 65 ປີແຫ່ງການນຳພາການປະຕິວັດຢູ່ປະເທດຊາດ ກໍ່ຄືແຂວງສາລະວັນພວກເຮົາ.

ເພື່ອສືບຕໍ່ເສີມຂະຫຍາຍທາດແທ້ ມູນເຊື້ອອັນດີງາມຂອງພັກ, ເຮັດຫຼ້ອນພາລະກຳປະຫວັດສາດອັນຍິ່ງໃຫຍ່ທີ່ຊາດ ແລະ ປະຊາຊົນມອບໝາຍໃຫ້ ຄະນະບໍລິຫານງານພັກແຂວງສາລະວັນ ຮຽກຮ້ອງມາຍັງພະນັກງານ, ສະມາຊິກພັກນັກຮົບທຸກໆຄົນ ຈົ່ງອອກແຮງທະນຸບຳລຸງຄຸນສົມບັດສິນທຳປະຕິວັດ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນ, ຍົກສູງລະດັບຄວາມຮູ້ໃນທຸກດ້ານຕື່ມອີກ,ໃກ້ຊິດສະໜິດຕິດພັນແໜ້ນກັບມະຫາຊົນ, ເຮັດຫຼ້ອນໜ້າທີ່ວຽກງານທີ່ພັກ ແລະລັດມອບໝາຍໃຫ້; ເຊີດຊູກຽດ ແລະ ອິດທິພົນຂອງພັກເຮົາຂຶ້ນຢ່າງບໍ່ຢຸດຢັ້ງ ເພື່ອ

ໃຫ້ສົມກັບຄວາມໄວ້ເນື້ອເຊື່ອໃຈ ຂອງປະຊາຊົນບັນດາເຜົ່າ, ສົມກັບເປັນຜູ້ຈັດຕັ້ງ ແລະ ນໍາພາທຸກໄຊຊະນະຂອງການປະຕິວັດພາຍໃນແຂວງສາລະວັນກ້າວຂຶ້ນ.

- ພັກປະຊາຊົນປະຕິວັດລາວທີ່ມີກຽດສະຫງ່າຫມັ້ນຍືນ!
- ຊົມເຊີຍວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 65 ປີຢ່າງສຸດໃຈ!
- ອອກແຮງສ້າງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ຫນັກແຫນ້ນ!
- ຕັ້ງຫນ້າສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ!
- ຍົກສູງຄວາມສາມາດນໍາພາ ແລະ ລັກສະນະນໍາຫນ້າຂອງພັກ, ເພີ່ມທະວີມະຫາສາມັກຄີທົ່ວປວງຊົນທັງຊາດ, ຍຶດຫມັ້ນແນວທາງປ່ຽນແປງໃຫມ່ຮອບດ້ານ ແລະ ມີຫຼັກການ, ປົກປັກຮັກສາ ແລະ ພັດທະນາປະເທດຊາດຕາມທິດຍືນຍົງສູ່ຈຸດຫມາຍສັງຄົມນິຍົມຢ່າງຫນັກແຫນ້ນ !
- ອອກແຮງເສີມຂະຫຍາຍມູນເຊື້ອປະຕິວັດ ຂອງພັກປະຊາຊົນປະຕິວັດລາວ!
- ເພື່ອຄວາມຈະເລີນວັດທະນາຂອງແຂວງສາລະວັນ, ເພື່ອຄວາມສົມບູນພູນສຸກຂອງປະຊາຊົນບັນດາເຜົ່າ, ທົ່ວພັກ ທົ່ວກອງທັບ ແລະ ທົ່ວປວງຊົນຊາວແຂວງສາລະວັນ ຜູ້ພິລະອາດຫານ ພ້ອມກັນກ້າວຂຶ້ນ! ຂ້າວຂຶ້ນ! ແລະກ້າວຂຶ້ນ!.

**( ຂໍຂອບໃຈ )**